# MANAGING YOUR MONEY

## BUYING FOR THE HOME

Housing is very expensive in the cities. Many people save money in the beginning by living in inexpensive furnished rooms, rather than apartments. Most apartments and houses are rented unfurnished. When you get a place of your own, you will want furniture.

You can watch for sales of furniture, other household goods and clothes in the newspaper. Sometimes whole pages or sections are sale advertisements for particular stores. White sales of sheets, linens, etc. and appliance sales are usually held in January. Sales of seasonal clothes and equipment are held at the end of each season; or some new items may be available in special sales at the beginning of each season.

Some stores guarantee you satisfaction with the goods you purchase. If you are not happy with an item, they will exchange it for something else or refund your money. Ask about the store's policy before buying. Goods purchased in as-is condition cannot usually be returned. Be careful about buying used appliances, even if there is a 30-day warranty or guarantee. If the store does not honor the warranty, you might have to go to small claims court to obtain a refund.

Some people buy furniture at second hand shops operated by religious and other voluntary organizations. Some of these are the Salvation Army, the St. Vincent de Paul Society and the Society for Goodwill Services. Ask at an information centre or immigrant aid agency where to find these stores or others like them. They can sell very cheaply because people give them used furniture, household articles and clothing. You can often find some attractive and very useful things in these shops.

You can also purchase used furniture through advertisements in

# ການທຳທັບເງິນຂອງທ່ານ

ເຮືອນເຊົ່າມັນແພງຫລາຍໃນຕົວເມືອງໃຫຍ່. ຫລາຍຄົນພະຍາຍາມທ້ອນເງິນທ້ອນຄຳໃນຕອນຕົ້ນ ໂດຍຊອກເຊົ່າຫ້ອງທີ່ມີເຄື່ອງຄົບຢູ່ ແທນທີ່ຈະເຊົ່າເຮືອນຫ້ອງແຖວຢູ່. ເຮືອນຫ້ອງແຖວແລະເຮືອນເປັນຫລັງມີໄວ້ໃຫ້ເຊົ່າແບບທີ່ບໍ່ມີເຄື່ອງເຮືອນເຄື່ອງຊານໃຫ້. ເມື່ອທ່ານເຊົ່າເຮືອນເຊົ່າຊານຂອງທ່ານເອງ ທ່ານກໍຈະຕ້ອງການມີເຄື່ອງຂອງຕົບແຕ່ງບ້ານ.

ທ່ານຄວນເບິ່ງໃນໜັງສືພິມເລື້ອຍໆວ່າຮ້ານຄ້າຮ້ານຂາຍຈະຂາຍພວກເຄື່ອງຕົບແຕ່ງບ້ານ, ເຄື່ອງປະຈຳບ້ານປະຈຳເຮືອນແນວຕ່າງໆແລະເຄື່ອງໜຸ່ງຫົ່ມແບບລົດລາຄາໃນເວລາໃດ. ບາງເທື່ອ ໜ້າໜັງສືພິມທັງໝົດເຕັມໄປດ້ວຍການໂຄສະນາຂາຍເຄື່ອງແບບລົດລາຄາຂອງຮ້ານຄ້າຕ່າງໆ. ພວກຜ້າປູບ່ອນ, ຜ້າປູໂຕະແລະອື່ນໆ ແລະເຄື່ອງໃຊ້ໄພ້ຜ້າຕ່າງໆນັ້ນ, ຕາມທັມມະດາແລ້ວ, ມັກລົດລາຄາໃນເດືອນມົກກະຣາ. ເຄື່ອງນຸ່ງຂອງຖືແລະເຄື່ອງໃຊ້ຕາມຣະດູການນັ້ນລົດລາຄາໃນແຕ່ລະທ້າຍລະດູ; ຫລືພວກເຄື່ອງໃໝ່ໆບາງແນວກໍມີໄວ້ຂາຍແບບລົດລາຄາໃນຕອນຕົ້ນຂອງແຕ່ລະຣະດູ.

ຮ້ານຄ້າບາງຮ້ານປະກັນວ່າທ່ານຈະໄດ້ຮັບຄວາມພໍໃຈໃນສິ່ງຂອງທີ່ທ່ານຊື້. ຖ້າທ່ານບໍ່ພໍໃຈໃນສິ່ງໃດສິ່ງນຶ່ງທີ່ທ່ານຊື້ມາ ທາງຮ້ານດັ່ງກ່າວກໍຈະຈັດການປ່ຽນເອົາແນວໃໝ່ໃຫ້ ຫລືວ່າຄືນເງິນໃຫ້ແກ່ທ່ານ. ໃຫ້ຖາມເບິ່ງນະໂຍບາຍຂອງຮ້ານກ່ອນທີ່ຈະທຳການຊື້ແນວໃດແນວນຶ່ງ. ສິ່ງຂອງທີ່ທ່ານຊື້ຕາມເງື່ອນໄຂ "ຕາມທີ່ເຫັນ" ທັມມະດາແລ້ວ ທ່ານບໍ່ສາມາດສົ່ງຄືນໄດ້. ໃຫ້ລະວັງເມື່ອທ່ານຊື້ເຄື່ອງໃຊ້ທີ່ໃຊ້ແລ້ວ ເຖິງແມ່ນວ່າເຄື່ອງໃຊ້ດັ່ງກ່າວຈະມີໃບປະກັນກ່ອນເຖິງ ມືອື່ນ ກໍຕາມ. ຖ້າຫາກວ່າຮ້ານຄ້າທີ່ກ່ຽວຂ້ອງບໍ່ຍອມເຮັດຕາມໃບປະກັນ ທ່ານອາດຈະຕ້ອງໄດ້ໄປຫາສານແພ່ງທີ່ກ່ຽວກັບນຳການຮຽກຄ່າເສັຽຫາຍທີ່ມີຈຳນວນໜ້ອຍ ເພື່ອຂໍເງິນຄືນ.

ບາງຄົນຊື້ເຄື່ອງຕົບແຕ່ງບ້ານນຳຮ້ານຂາຍເຄື່ອງມືສອງຊຶ່ງແມ່ນທາງພວກອົງການສາສນາແລະອົງການເມດຕາຈິດຕ່າງໆເປັນຜູ້ຄວບຄຸມ. ສ່ວນນຶ່ງຂອງຮ້ານຂາຍເຄື່ອງພວກນີ້ກໍແມ່ນ Salvation Army, St. Vincent de Paul Society ແລະ Society for Goodwill Services. ໃຫ້ຖາມຫາທີ່ຕັ້ງແລະລາຍລະອຽດຕ່າງໆກ່ຽວກັບຮ້ານຄ້າພວກນີ້ແລະພວກອື່ນໆທີ່ທຳໜ້າທີ່ແນວດຽວກັນ ນຳສູນໃຫ້ລາຍລະອຽດ ຫລືອົງການໃຫ້ຄວາມຊ່ວຍເຫລືອແກ່ຜູ້ເຂົ້າເມືອງໃໝ່ບ່ອນໃດບ່ອນນຶ່ງ. ຮ້ານຄ້າພວກນີ້ຂາຍຖືກໄດ້ກໍເພາະວ່າເຄື່ອງທີ່ຂາຍດັ່ງເຊັ່ນເຄື່ອງຕົບແຕ່ງເຮືອນຊານ, ເຄື່ອງເຮືອນແນວອື່ນໆແລະເຄື່ອງນຸ່ງຂອງຖືນັ້ນໄດ້ມາລ້າໆ. ສ່ວນຫລາຍແລ້ວ ທ່ານອາດຈະພົບພໍ້ສິ່ງທີ່ສວຍງາມແລະເປັນປະໂຫຍດຫລາຍໃນທາງຮ້ານພວກນີ້.

ທ່ານຍັງສາມາດຫາຊື້ເຄື່ອງຕົບແຕ່ງບ້ານເຮືອນທີ່ໃຊ້ແລ້ວໄດ້ ໂດຍໃຫ້ອ່ານເບິ່ງໜ້າໂຄສະນາ

newspaper classified sections or on bulletin boards in laundromats and supermarkets. There may be a local newspaper which lists only second-hand articles for sale by people in your area. Check at a newstand. Watch for auctions or neighbourhood garage sales as well.

You should save money in the summer for extra costs you will have in winter. If you rent a house, you will probably have to pay for heat. You will need warmer clothing and food prices are higher in winter.

CREDIT BUYING

You can buy on credit when you buy an article or a service. Instead of paying for it all at once, you arrange to make payments weekly, monthly or quarterly until it is all paid for. This is convenient because you get the item you want earlier, but it is more expensive than paying cash for the merchandise because you will be charged additional money as interest or finance charges when you agree to purchase on credit. You should be very careful about credit buying. You could promise to pay so much each month that you do not have enough money left for rent, food, clothing and other necessities. The people from whom you made your purchase may begin pressing you for payment, which adds to your worries.

There are different methods of buying on credit. You may have a charge account at a store or with a company from which you buy gasoline, oil or other goods or services. Each time you buy something, you show your credit card and sign a bill. At the end of each month, you receive a bill for the total amount you have bought during that time. Usually there are no interest charges, if you pay the bill immediately, but you pay a high interest if you let the bill build up month after month.

Another plan is to make a small down payment on an article.

ຂອງພວກໜັງສືພິມ ຫລືໃຫ້ອ່ານເບິ່ງກະດານໂຄສະນາໃນບ່ອນຈັກເຄື່ອງຫລືໃນຕລາດທັງຫລາຍ. ໃນຄຸ້ມທ່ານອາດມີໜັງສືພິມທີ່ໂຄສະນາຂາຍເຄື່ອງທີ່ໃຊ້ແລ້ວໂດຍສະເພາະ. ໃຫ້ຊອກຫາໜັງສືພິມດັ່ງກ່າວນັ້ນນຳຮ້ານຂາຍໜັງສືພິມທົ່ວໄປ. ນອກຈາກນັ້ນ ກໍໃຫ້ຊອມເບິ່ງການຂາຍປະມູນ ຫລືການຂາຍເລຕາມກາລາລົດ.

ທ່ານຄວນທ້ອນເງິນທ້ອນຄຳໃນຣະດູຮ້ອນໄວ້ ເພື່ອຮັບໜ້າກັບລາຍຈ່າຍພິເສດໃນຣະດູໜາວ. ຖ້າທ່ານເຊົ່າເຮືອນເປັນຫລັງ ທ່ານຄົງອາດຈະໄດ້ເສັຽຄ່າອາຍຮ້ອນ. ທ່ານຈະຕ້ອງການເຄື່ອງໜາວ ແລະລາຄາຂອງຢູ່ຂອງກິນກໍແພງຂຶ້ນໃນຣະດູໜາວ.

<u>ການຊື້ດ້ວຍເງິນເຊື່ອ</u>

ທ່ານສາມາດຊື້ດ້ວຍເງິນເຊື່ອໄດ້ ເມື່ອທ່ານຊື້ຂອງແນວໃດແນວນຶ່ງຫລືການບໍຣິການແນວໃດແນວນຶ່ງ. ແທນທີ່ຈະຈ່າຍເງິນສົດສຳລັບສິ່ງຂອງຫລືການບໍຣິການດັ່ງກ່າວບາດດຽວໂລດ ທ່ານກໍເຮັດສັນຍາຈ່າຍເປັນລາຍອາທິດ, ລາຍເດືອນ ຫລືລາຍສາມເດືອນໄປຈົນກວ່າຈະໝົດ. ວິທີນີ້ສະດວກດີ ເພາະວ່າທ່ານໄດ້ສິ່ງຂອງທີ່ທ່ານຕ້ອງການໄວ້ ແຕ່ວ່າມັນແພງກວ່າການຈ່າຍເງິນສົດໃຫ້ໝົດໂລດບາດດຽວ ເພາະວ່າທ່ານຈຳຕ້ອງໄດ້ຈ່າຍດອກເບ້ຽ. ທ່ານຕ້ອງລະວັງໃຫ້ດີເມື່ອທ່ານຊື້ເຄື່ອງຊື້ຂອງດ້ວຍເງິນເຊື່ອ. ທ່ານອາດສັນຍາວ່າຈະຈ່າຍໃຫ້ເຂົາເຈົ້າແຕ່ລະເດືອນນັ້ນຫລາຍໂພດ ຈົນວ່າທ່ານບໍ່ມີເງິນພຽງພໍທີ່ຈະຈ່າຍຄ່າເຊົ່າເຮືອນ, ອາຫານ, ເຄື່ອງນຸ່ງ ແລະແນວຈຳເປັນອື່ນໆ. ນອກຈາກນັ້ນ ຜູ້ທີ່ທ່ານຊື້ເຄື່ອງນຳອາດເລັ່ງໃຫ້ທ່ານຈ່າຍຕາມສັນຍາເມື່ອທ່ານຊັກຊ້າ; ນີ້ກໍມີແຕ່ຈະເພີ່ມຄວາມກັງວົນໃຈໃຫ້ແກ່ທ່ານ.

ການຊື້ດ້ວຍເງິນເຊື່ອມີຫລາຍແບບ. ທ່ານອາດມີບັດຊື້ເງິນເຊື່ອນຳຫ້າງຮ້ານ ຫລືນຳບໍຣິສັດໃດບໍຣິສັດນຶ່ງທີ່ທ່ານຊື້ນ້ຳມັນ, ນ້ຳມັນເຄື່ອງ ຫລືສິ່ງຂອງຫລືການບໍຣິການອື່ນໆນຳ. ທຸກໆຄັ້ງທີ່ທ່ານຊື້ແນວໃດແນວນຶ່ງ ທ່ານກໍສະແດງບັດເງິນເຊື່ອຂອງທ່ານ ແລະເຊັນໃບຮັບ. ຕົກທ້າຍເດືອນມາ ທ່ານກໍຈະໄດ້ຮັບໃບເກັບເງິນສຳລັບສິ່ງຂອງຕ່າງໆທີ່ທ່ານໄດ້ຊື້ໃນເດືອນນັ້ນ. ໂດຍທົ່ວໄປແລ້ວ ທ່ານບໍ່ຕ້ອງໄດ້ເສັຽຄ່າດອກເບ້ຽແຕ່ຢ່າງໃດ ຖ້າຫາກວ່າທ່ານຈ່າຍຕາມຈຳນວນທີ່ຢູ່ໃນໃບເກັບເງິນນັ້ນໝົດບາດດຽວໂລດ. ທ່ານຈຳຕ້ອງໄດ້ຈ່າຍຄ່າດອກເບ້ຽສູງ ຖ້າຫາກວ່າທ່ານປ່ອຍໃບເກັບເງິນທີ່ທ່ານໄດ້ຮັບນັ້ນກອງກັນໄວ້ຫລາຍໆເດືອນຕິດຕໍ່ກັນ.

ການຊື້ດ້ວຍເງິນເຊື່ອອີກແບບນຶ່ງກໍແມ່ນເມື່ອທ່ານວາງເງິນມັດຈຳຈຳນວນນຶ່ງສຳລັບສິ່ງຂອງທີ່ທ່ານຊື້. ຕໍ່ມາທ່ານກໍເຊັນສັນຍາວ່າຈະຈ່າຍສ່ວນເຫລືອເປັນຈຳນວນທີ່ເທົ່າກັນເປັນລາຍເດືອນໄປໃຫ້

You then sign a contract to pay the balance in equal monthly installments over a period of months. Many people use this plan to buy cars, refrigerators, washing machines, sewing machine, TV sets, vacuum cleaners, furniture and even home improvements or repairs. The contract you have signed may be sold to a finance company and monthly payments will be made to this company.

Read everything you sign carefully and make sure you understand it. Once it is signed you must fulfill all the terms. Understand how much interest you are paying. The contract must include the amount of money involved, in dollars and cents, the percentage rate of interest, the rates at which payments are to be made and the total cost, including interest.

If you fall behind in monthly payments to a finance company, the company may take back or repossess the goods if less than two-thirds of the total amount has been paid. Repossession of the goods does not remove your obligation to complete payments. The finance company can sell the goods at a price lower than that which you paid, leaving you to pay the difference or outstanding balance. Therefore, it is possible that you could be paying for something that you no longer possess. Until all payments are made, it is illegal for you to sell the article to someone else.

Before buying anything, consider how long it may last. It is not pleasant to continue making payments long after the article you have bought is worn out or you no longer need it.

Each person who uses credit builds up a credit rating, filed at the credit bureau, which is consulted by any institution extending credit to the person in the future. In order to see your file at the credit bureau you must go there in person.

Other Organizations

If you live in Toronto, Ottawa, Hamilton or Kitchener, you can

ໝົດຕາມກຳນົດເວລາທີ່ຕົກລົງກັນ. ຫລາຍຄົນໃຊ້ແຜນນີ້ ເມື່ອເຂົາເຈົ້າຊື້ລົດລາ, ຕູ້ເຢັນ, ຈັກຊັກເຄື່ອງ, ຈັກຫຍິບເຄື່ອງ, ໂທລະທັດ, ຈັກດູດຝຸ່ນ, ເຄື່ອງຕົບແຕ່ງບ້ານ ແລະແມ່ນກະທັ້ງເມື່ອພວກເຂົາເຈົ້າຕ້ອງການເສີມຫລໍ່ສ້ອມແຊມເຮືອນຊານ. ທາງເຈົ້າຂອງແນວທີ່ທ່ານຊື້ອາດຂາຍສັນຍາທີ່ທ່ານເຊັນນັ້ນໃຫ້ແກ່ບໍລິສັດການເງິນບໍລິສັດໃດບໍລິສັດໜຶ່ງ ແລະເງິນທີ່ທ່ານຈ່າຍໃຫ້ແຕ່ລະເດືອນນັ້ນ ບໍລິສັດດັ່ງກ່າວນີ້ກໍຈະເປັນຜູ້ຮັບຕໍ່ໄປ.

ໃຫ້ອ່ານແລະທຳຄວາມເຂົ້າໃຈແນວທີ່ທ່ານເຊັນນັ້ນໃຫ້ດີກ່ອນ. ເມື່ອທ່ານເຊັນມັນລົງໄປແລ້ວ ທ່ານຕ້ອງເຮັດຕາມຂໍ້ສັນຍານັ້ນທຸກໆຂໍ້. ໃຫ້ຮູ້ວ່າອັດຕາດອກເບ້ຍທີ່ທ່ານຈະຕ້ອງຈ່າຍນັ້ນມັນຕົກເປັນທີ່ໃດແທ້. ສັນຍານັ້ນຕ້ອງກ່າວເຖິງຈຳນວນເງິນທີ່ກູ້ຢືມ, ອັດຕາດອກເບ້ຍ, ຈຳນວນທີ່ທ່ານຕ້ອງຈ່າຍແຕ່ລະເດືອນ ແລະຈຳນວນທີ່ທ່ານຕ້ອງຈ່າຍທັງໝົດລວມທັງດອກເບ້ຍ.

ຖ້າທ່ານຊັກຊ້າໃນການຈ່າຍປະຈຳເດືອນຂອງທ່ານ ທາງບໍລິສັດກໍອາດຈະຍຶດສິ່ງຂອງທີ່ທ່ານຊື້ມານັ້ນ ຖ້າທ່ານເອົາເງິນທີ່ທ່ານຈ່າຍໄປແລ້ວນັ້ນບໍ່ເຖິງສອງສ່ວນສາມຂອງຈຳນວນທັງໝົດທີ່ທ່ານຈະຕ້ອງຈ່າຍ. ການທີ່ທາງບໍລິສັດທາງຮ້ານມາຍຶດສິ່ງທີ່ທ່ານຊື້ມານັ້ນບໍ່ໝາຍຄວາມວ່າຄວາມຮັບຜິດຊອບຂອງທ່ານຈະສິ້ນສຸດລົງ. ບໍລິສັດທາງຮ້ານດັ່ງກ່າວອາດຂາຍສິ່ງຂອງທີ່ຍຶດມາໃນລາຄາທີ່ຕ່ຳກວ່າລາຄາທີ່ທ່ານຊື້. ທ່ານຈຳຕ້ອງໄດ້ໃຊ້ສ່ວນທີ່ເຫລືອຄືນ. ດ້ວຍເຫດນີ້ ມັນເປັນໄປໄດ້ທີ່ທ່ານອາດຈະໄດ້ໃຊ້ຄ່າສິ່ງຂອງທີ່ບໍ່ຢູ່ໃນຄອບຄອງຂອງທ່ານແລ້ວ. ຈົນກວ່າທ່ານຈະຈ່າຍໝົດ ມັນເປັນການຜິດກົດໝາຍທີ່ທ່ານຈະຂາຍສິ່ງຂອງທີ່ທ່ານຊື້ມາໃຫ້ແກ່ຄົນອື່ນ.

ກ່ອນຈະຊື້ແນວໃດແນວໜຶ່ງ ໃຫ້ກະເບິ່ງວ່າມັນຊຸ້ມດີປານໃດ. ມັນບໍ່ສົມເຫດສົມຜົນປານໃດທີ່ທ່ານຈຳຕ້ອງຈ່າຍຄ່າສິ່ງຂອງທີ່ທ່ານຊື້ມາຕໍ່ໄປອີກດົນ ຫລັງຈາກທີ່ສິ່ງຂອງດັ່ງກ່າວເພພັງໄປແລ້ວ ຫລືທ່ານບໍ່ຕ້ອງການໃຊ້ອີກແລ້ວ.

ທຸກໆຄົນທີ່ໃຊ້ເງິນເຊື່ອສ້າງຊື່ສຽງທາງການໃຊ້ເງິນເຊື່ອຂອງເຂົາເຈົ້າເອງ. ບັນທຶກກ່ຽວກັບການໃຊ້ເງິນເຊື່ອຂອງພວກເຂົາເຈົ້າແມ່ນທາງຫ້ອງການເງິນເຊື່ອເປັນຜູ້ເກັບມ້ຽນ. ສະຖາບັນການເງິນຕ່າງໆໃຊ້ບັນທຶກດັ່ງກ່າວເປັນຕົວຕັ້ງ ເມື່ອເຂົາເຈົ້າພິຈາລະນາຈະໃຫ້ທ່ານໃຊ້ເງິນເຊື່ອໃນອະນາຄົດ. ຖ້າຕ້ອງການເບິ່ງບັນທຶກກ່ຽວກັບຕົວທ່ານ ທ່ານຕ້ອງໄປຫາຫ້ອງການເງິນເຊື່ອດ້ວຍຕົນເອງ.

**<u>ອົງການຈັດຕັ້ງອື່ນໆ</u>**

ຖ້າທ່ານຢູ່ໃນໂຕຣົງໂຕ, ອອດຕາວາ, ຣາມິນຕັນ ຫລືຄິສເນີ ທ່ານສາມາດໂທລະສັບໄປຫາ

telephone the Better Business Bureau for advice and to get a report on the reliability of a company you are dealing with. The bureau will also investigate complaints. These bureaus have staff who speak several languages. Check before you make a deal if you are in doubt.

## BANKS AND TRUST COMPANIES

It is not wise to keep large sums of money with you or around the house. The safest place for your money is in an account in a bank, a trust company, a credit union or the Province of Ontario Savings Office. These institutions are closely regulated by the federal and provincial governments.

A trust company is similar to a bank. Because it operates under a different set of regulations, it can perform some services which a bank cannot. A trust company can manage investments and property and collect rents. You can name a trust company in your will to settle your estate when you die. Credit unions offer basic banking services but differ from banks and trust companies in that you have to be a member of a defined group or association to bank with them. See the section later in this chapter. Whether you use a bank, trust company or credit union, it is important to find out the services that it has to offer you. Most banks and trust companies are open during normal banking hours from Monday to Friday, 10 a.m. to 3 p.m. Some are also open on Friday evenings and Saturday mornings.

### Opening an Account

To put money in a bank or trust company, you must open an account. There are three basic types of bank accounts:

- A savings account, can be chequing or non-chequing. A chequing account means you can write cheques and also be

ຕ້ອງການສົ່ງເສີມການຄ້າໄດ້ ເພື່ອຂໍຄວາມແນະນຳ ແລະເພື່ອຂໍລາຍງານກ່ຽວກັບຖານະຄວາມເຊື່ອຖືຂອງບໍຣິສັດທີ່ທ່ານມີການພົວພັນນຳ. ທາງຕ້ອງການຍັງທຳການສືບສວນການຕ່ວາຕ່າງໆນຳ. ຕ້ອງການພວກບັນພະນັກງານທີ່ປາກຫລາຍພາສາໄວ້ຕອນຮັບ. ໃຫ້ສືບເບິ່ງກ່ອນ ກ່ອນທີ່ທ່ານຈະຕົກລົງເຊັນສັນຍາແນວໃດແນວນຶ່ງ ຖ້າຫາກວ່າທ່ານມີຄວາມສົງສັຍ.

<u>ທະນາຄານ ແລະ ບໍຣິສັດຫລັກສັບທັງຫລາຍ</u>

ມັນເປັນການບໍ່ຮອບຄອບພໍປານໃດທີ່ທ່ານຈະຮັກສາເງິນຈຳນວນຫລາຍໄວ້ນຳທ່ານ ຫລືນຳເຮືອນນຳຈານ. ບ່ອນມ້ຽນທີ່ປອດພັຍທີ່ສຸດສຳລັບເງິນທ່ານກໍແມ່ນໃນບັນຊີນຳທະນາຄານ, ນຳບໍຣິສັດຫລັກສັບຕ່າງໆ ຫລືນຳຫ້ອງການຝາກເງິນຂອງແຂວງອົງຕາຣິໂອ. ຣັຖບານກາງແລະຣັຖບານແຂວງຄວບຄຸມອົງການຕ່າງໆພວກນີ້ຢ່າງໃກ້ຊິດ.

ບໍຣິສັດຫລັກສັບແບບນຶ່ງທີ່ເອີ້ນວ່າ Trust Company ນັ້ນຄ້າຍຄືງກັບທະນາຄານ. ຍ້ອນວ່າມັນປະຕິບັດງານພາຍໃຕ້ກົດເກນທີ່ແຕກຕ່າງ ມັນຈຶ່ງສາມາດໃຫ້ການບໍຣິການບາງຢ່າງທີ່ທາງທະນາຄານບໍ່ສາມາດ. ບໍຣິສັດຫລັກສັບແບບນີ້ສາມາດຄວບຄຸມການລົງທຶນແລະສັບສິນ ແລະເກັບຄ່າເຊົ່າເຮືອນ. ທ່ານສາມາດບົ່ງຊີ້ບໍຣິສັດຫລັກສັບບໍຣິສັດໃດບໍຣິສັດນຶ່ງໃນພິນັຍກັມທ່ານ ເພື່ອໃຫ້ເປັນຜູ້ຈັດການແບ່ງປັນສັບສິນບັດຂອງທ່ານເມື່ອທ່ານລົ້ມຕາຍລົງ. " Credit Union " ແມ່ນບໍຣິສັດຫລັກສັບອີກແບບນຶ່ງຊຶ່ງໃຫ້ການບໍຣິການພື້ນຖານແບບດຽວກັບພວກທະນາຄານ ແຕ່ວ່າມີຄວາມແຕກຕ່າງໄປຈາກພວກທະນາຄານແລະບໍຣິສັດຫລັກສັບທີ່ເອີ້ນວ່າ " Trust Companies " ໃນແງ່ທີ່ວ່າທ່ານຕ້ອງເປັນສະມາຊິກຂອງການຈັດຕັ້ງແນວໃດແນວນຶ່ງກ່ອນ ກ່ອນທີ່ຈະທຳການພົວພັນທາງດ້ານເງິນຄຳນຳພວກມັນໄດ້. ໃຫ້ເບິ່ງຫົວຂໍ້ກ່ຽວຂ້ອງຕໍ່ໄປໃນບົດນີ້. ບໍ່ວ່າທ່ານຈະໃຊ້ທະນາຄານ, ບໍຣິສັດຫລັກຊັບແຕ່ລະແບບທີ່ກ່າວມາ ມັນສຳຄັນທີ່ທ່ານຈະຮຽນຮູ້ກ່ຽວກັບການບໍຣິການຕ່າງໆທີ່ການຈັດຕັ້ງພວກນີ້ມີໄວ້ໃຫ້ທ່ານໃຊ້. ພວກທະນາຄານ ແລະບໍຣິສັດຫລັກສັບ " Trust Companies " ສ່ວນໃຫຍ່ເປີດໃຫ້ການບໍຣິການຕັ້ງແຕ່ວັນຈັນຫາວັນສຸກ, ໑໐ໂມງເຊົ້າ ຫາ ໓ໂມງແລງ. ບາງພວກກໍເປີດວັນສຸກຕອນແລງແລະວັນເສົາຕອນເຊົ້າອີກ.

<u>ການເປີດບັນຊີເງິນ</u>

ເພື່ອຈະຝາກເງິນນຳທະນາຄານບ່ອນໃດບ່ອນນຶ່ງ ທ່ານຕ້ອງເປີດບັນຊີເງິນຂອງທ່ານກ່ອນ. ມີບັນຊີເງິນທະນາຄານພື້ນຖານຢູ່ສາມຢ່າງນຳກັນ:

paid interest. A non-chequing account pays a higher interest rate but you cannot write cheques on it, although you can withdraw cash at any time.

- A personal chequing account is used for paying household and personal bills. No interest is paid but the service cost is lower, monthly statements are provided and your cancelled cheques are returned to you by the bank.
- A current account is usually used by businesses and people writing a large number of cheques.

Each account has a code number, which should be used in your dealing with the bank.

Passbook

The bank or trust company records every transaction you make at the bank. For savings accounts, every deposit, withdrawal and interest payment is recorded in your passbook. The passbook should be presented to the teller each time a transaction is made. It should be kept in a safe place but if it is lost or stolen, the bank should be notified immediately.

Writing Cheques

A cheque is your written instruction to the bank to pay some of your money to the person or organization named. It is important that you use only the cheques which the bank has given you because they are printed in special magnetic ink with your account code number which can be read automatically by cheque-sorting machines.

-ບັນຊີອອມສິນ ( Savings Account) ອາດຈະມາໃນແບບທີ່ໃຊ້ເຊັກໄດ້ (Chequing Savings Account ) ຫລືແບບທີ່ໃຊ້ເຊັກບໍ່ໄດ້ (Non-chequing Savings Account ). ບັນຊີອອມສິນແບບໃຊ້ເຊັກໄດ້ນັ້ນໝາຍຄວາມວ່າທ່ານສາມາດຂຽນເຊັກໄດ້ ແລະໄດ້ຮັບດອກເບັ້ຽນຳພ້ອມ. ບັນຊີອອມສິນແບບຂຽນເຊັກບໍ່ໄດ້ໃຫ້ດອກເບັ້ຽສູງກວ່າ ແຕ່ວ່າທ່ານຂຽນເຊັກບໍ່ໄດ້ ເຖິງແມ່ນວ່າທ່ານຈະສາມາດຖອນເງິນສົດອອກຍາມໃດກໍໄດ້.

-ບັນຊີແບບໃຊ້ເຊັກສ່ວນຕົວ ( Personal Chequing Account ) ໃຊ້ໄວ້ສຳລັບພະເຊີນຫນ້າກັບຄ່າໃຊ້ຈ່າຍກ່ຽວກັບເຮືອນຊານ ແລະຄ່າໃຊ້ຈ່າຍສ່ວນຕົວ. ບັນຊີແບບນີ້ມີດອກເບັ້ຽໃຫ້ ແຕ່ວ່າຄ່າບໍຣິການນັ້ນຕ່ຳ ແລະທ່ານຍັງຈະໄດ້ຮັບລາຍງານກ່ຽວກັບເງິນທ່ານໃນທະນາຄານເປັນເດືອນໆໄປ ແລະເຊັກທີ່ທ່ານໃຊ້ແລ້ວນັ້ນຈະຖືກສົ່ງມາໃຫ້ທ່ານເກັບໄວ້ເປັນຫລັກຖານ.

-ບັນຊີກະແສລາຍວັນ ( Current Account ) ຕາມທັມມະດາແລ້ວ ແມ່ນທາງພວກບໍຣິສັດແລະບຸກຄົນທີ່ຂຽນເຊັກຈຳນວນຫລາຍເປັນຜູ້ໃຊ້.

ບັນຊີແຕ່ລະບັນຊີມີເລກລະຫັດປະຈຳ. ທ່ານຄວນໃຊ້ເລກລະຫັດດັ່ງກ່າວ ເມື່ອຕິດຕໍ່, ເມື່ອເຂົ້າຫາທະນາຄານຂອງທ່ານ.

## ປື້ມບັນຊີເງິນອອມສິນ

ທາງທະນາຄານຫລືບໍຣິສັດຫລັກສັບ "Trust Company" ບັນທຶກການເອົາເງິນອອກເງິນເຂົ້າຂອງທ່ານທຸກໆເທື່ອ. ສຳລັບບັນຊີອອມສິນແລ້ວ ການເອົາເງິນເຂົ້າ, ການຖອນເງິນ ແລະການຈ່າຍດອກເບັ້ຽແຕ່ລະຄັ້ງນັ້ນຈະຖືກບັນທຶກລົງໃນປື້ມບັນຊີເງິນອອມສິນຂອງທ່ານ. ທ່ານຄວນຍື່ນປື້ມດັ່ງກ່າວໃຫ້ແກ່ພະນັກງານຮັບແລະຈ່າຍເງິນ ທຸກໆຄັ້ງທີ່ທ່ານໄປເອົາເງິນເຂົ້າເງິນອອກ ແລະທ່ານຄວນຮັກສາມັນໄວ້ໃນທີ່ປອດພັຍ; ຖ້າຫາກມັນເສັຽ ຫລືຖືກຄົນລັກເອົາໄປ ທ່ານຄວນແຈ້ງໃຫ້ທາງທະນາຄານຮູ້ທັນທີ.

## ການຂຽນເຊັກ

ເຊັກແມ່ນຄຳສັ່ງທາງລາຍລັກອັກສອນຂອງທ່ານໃຫ້ທາງທະນາຄານຈ່າຍເງິນຂອງທ່ານຈຳນວນໃດຈຳນວນນຶ່ງໃຫ້ແກ່ບຸກຄົນຫລືການຈັດຕັ້ງແນວໃດແນວນຶ່ງທີ່ທ່ານບົ່ງຊີ້. ມັນສຳຄັນຫລາຍທີ່ທ່ານຈະຕ້ອງໃຊ້ແຕ່ເຊັກທີ່ທາງທະນາຄານໃຫ້ທ່ານ ຍ້ອນວ່າເລກລະຫັດຂອງບັນຊີທ່ານໃນເຊັກພວກນັ້ນຖືກພິມອອກ

If you make a small mistake on a cheque, you can initial a change; otherwise don't try to correct it; tear up the cheque and use a new one. Always use a pen, not a pencil, and write clearly.

## Endorsing Cheques

If you wish to cash or deposit a cheque payable to you, you must endorse it by signing your name on the back of the cheque. An endorsed cheque can be cashed by anyone. Therefore, cheques should not be endorsed until the time they are actually being cashed or deposited in the bank.

## Stopping Payment of a Cheque

If a cheque that you write is lost or if payment should not be made because of a valid reason, you can ask the bank to stop payment of the cheque by calling and then giving them written notice immediately. If the cheque has not already been cashed, the bank will attempt to stop the cheque from being processed and payment made. A charge is made for this service.

## Certified Cheques

For certain payments, it may be necessary to provide a certified cheque. The bank makes sure there is enough money in your account to cover the cheque and places a certification stamp across its face. The amount of the cheque is deducted from your account when the cheque is certified. If the certified cheque is not used, it should be returned to the bank and re-deposited into your account. Do not destroy a certified cheque as you would an ordinary cheque that is not used.

## Bank Personnel

For making deposits in and withdrawals from your account, you should go to the regular bank tellers at the main counter. There is usually another counter where you go to open an account, buy travellers' cheques, etc.

ກ່ອນນຳເຫມິກແມ່ເຫລັກພິເສດ. ເຄື່ອງຈັກແຍກເຊັກຈະທຳການອ່ານເລກລະຫັດຂອງບັນຊີດັ່ງວ່າ ຢ່າງອັດຕະໂນມັດ. ຖ້າທ່ານຂຽນເຊັກຜິດເລັກນ້ອຍໆ ທ່ານກໍແປງໄດ້ ໂດຍຂຽນຊື່ຫຍໍ້ໄວ້ຂ້າງເປັນ ຫລັກຖານ; ບໍ່ດັ່ງນັ້ນແລ້ວ ກໍຢ່າແປງເລີຍ; ໃຫ້ຈີກມັນຖິ້ມ ແລ້ວໃຊ້ໃບໃຫມ່. ໃຫ້ໃຊ້ປາກກາ, ຢ່າ ໃຊ້ສີ ແລະໃຫ້ຂຽນໃຫ້ແຈ້ງ.

ການສລັກຫລັງເຊັກ

ຖ້າທ່ານປະສົງຈະເອົາເຊັກທີ່ສົ່ງຈ່າຍໃຫ້ທ່ານໄປເອົາເງິນສົດຫລືໄປເຂົ້າບັນຊີໄວ້ ທ່ານຕ້ອງ ສລັກຫລັງໃບເຊັກດັ່ງກ່າວ ໂດຍເຊັນຊື່ທ່ານລົງໄປໃນສ່ວນຫລັງຂອງມັນ. ໃບເຊັກທີ່ຖືກສລັກຫລັງ ແລ້ວ ໃຜໆກໍສາມາດເອົາໄປຖອນເອົາເງິນໄດ້. ດ້ວຍເຫດນີ້ ພວກເຊັກບໍ່ຄວນຈະຖືກສລັກຫລັງຈົນ ກວ່າຈະຮອດເວລາທີ່ຈະເອົາເງິນຫລືຈະເອົາເຂົ້າບັນຊີໄວ້ໃນທະນາຄານ.

ການຢັບຢັ້ງເຊັກເງິນ

ຖ້າຫາກເຊັກທີ່ທ່ານຂຽນແລ້ວນັ້ນເຮັດເສັຽ ຫລືຖ້າຫາກທ່ານປ່ຽນໃຈບໍ່ຕ້ອງການຈ່າຍຈຳນວນ ເງິນທີ່ທ່ານຂຽນລົງໄປ ຍ້ອນເຫດຜົນທີ່ສົມຄວນແນວໃດແນວນຶ່ງແລ້ວ ທ່ານກໍສາມາດຂໍຮ້ອງໃຫ້ທາງທະ ນາຄານບໍ່ຈ່າຍເງິນໃຫ້ແກ່ໃບເຊັກດັ່ງກ່າວໄດ້ໂດຍທາງໂທລະສັບ. ທ່ານຄວນສົ່ງໃບຮ້ອງຂໍຕິດຕາມ ໄປທັນທີ. ຖ້າຫາກວ່າເຊັກທີ່ວ່ານັ້ນບໍ່ທັນຖືກນຳໄປແລກເອົາເງິນເທື່ອແລ້ວ ທາງທະນາຄານກໍຈະພະ ຍາຍາມຢຸດການຈ່າຍໃຫ້ຕາມຄຳຂໍຮ້ອງ. ທະນາຄານຈັກເອົາຄ່າບໍຣິການ.

ການຢັ້ງຢືນເຊັກ

ສຳລັບການຈ່າຍບາງແນວແລ້ວ ມັນອາດຈຳເປັນທີ່ຈະໃຊ້ເຊັກທີ່ຖືກຢັ້ງຢືນຈາກທາງທະນາຄານ. ທະນາຄານກວດເບິ່ງກ່ອນວ່າເງິນໃນບັນຊີທ່ານນັ້ນມີຈຳນວນພຽງພໍສຳລັບຈຳນວນທີ່ທ່ານຂຽນສົ່ງຈ່າຍ ໃນໃບເຊັກນັ້ນແລ້ວ ຈຶ່ງປະທັບຕາຢັ້ງຢືນລົງໃສ່ໜ້າໃບເຊັກດັ່ງກ່າວ. ຈຳນວນເງິນທີ່ທ່ານຂຽນລົງ ໄປໃນເຊັກນັ້ນ ທາງທະນາຄານຈະຫັກອອກຈາກບັນຊີເງິນທ່ານທັນທີທີ່ໃບເຊັກນັ້ນຖືກປະທັບຕາຢັ້ງຢືນ. ຖ້າຫາກວ່າທ່ານບໍ່ໃຊ້ໃບເຊັກທີ່ວ່າ ທ່ານຄວນເອົາກັບຄືນໄປທະນາຄານ ແລະເອົາເຂົ້າບັນຊີທ່ານຄືນ. ຢ່າທຳລາຍເຊັກທີ່ຖືກທາງທະນາຄານຢັ້ງຢືນ ເຫມືອນກັນກັບທ່ານທຳລາຍເຊັກທັມມະດາທີ່ທ່ານບໍ່ໃຊ້.

ພະນັກງານທະນາຄານ

ເພື່ອເອົາເງິນເຂົ້າຫລືເອົາເງິນອອກຈາກບັນຊີທ່ານ ທ່ານຄວນເຂົ້າຫາພະນັກງານປະຈຳໃນ ທະນາຄານທີ່ໂຕະພວກເຂົາເຈົ້າ. ຕາມທັມມະດາແລ້ວ ມີໂຕະອີກໂຕະນຶ່ງທີ່ທ່ານຄວນໄປຫາ ເພື່ອ ເປີດບັນຊີ, ຊື້ເຊັກເດີນທາງ ແລະອື່ນໆ. ຖ້າຫາກວ່າມີບັນຫາກ່ຽວກັບບັນຊີເງິນທ່ານ ທ່ານກໍຈະ

If there is a problem with your account, you will be sent to see a supervisor. Each bank has a loans officer who interviews customers wishing to take out bank loans. The manager is available to assist with financial and investment advice and counselling.

Paying Bills

You can pay Hydro, telephone and gas bills at the bank and at some trust companies. There may be a small charge for this service. You can also pay bills by mailing a cheque or paying direct at the utility or other company office.

When you write a cheque, always have enough money in your account to cover it. If you do not, the cheque will be considered NSF (Not Sufficient Funds) and will not be honored by your bank. The cheque will be returned to the bank where it was cashed and the amount charged to the account of the person who cashed it. This can create many problems for you and the other person. You may wish to inquire at your bank to see if special arrangements can be made to have the bank honor any NSF cheque that you might write once in a while as a result of a genuine error or oversight. It is a criminal offence to write a cheque when you know you do not have enough money in your account to cover it.

Traveller's Cheques

It is safer to carry traveller's cheques than cash on a trip. You get them at a bank or trust company in Canadian dollars or in any foreign currency and exchange them for money as you need it. You sign them when you buy them and they cannot be cashed until you sign them a second time so the signatures can be compared. If they are lost, stolen or destroyed, the issuer will refund your money. Keep a record of those you cash on the forms provided. Also, keep the list of the numbers in a separate place in case you lose the cheques. You can also exchange Canadian money for foreign currency at the

ຖືກສົ່ງເຂົ້າພົບກັບຜູ້ດູແລປະຈຳທະນາຄານ. ທະນາຄານແຕ່ລະບ່ອນມີເຈົ້າໜ້າທີ່ຄວບຄຸມການໃຫ້ຢືມເງິນຜູ້ນຶ່ງເປັນຜູ້ສຳພາດພວກລູກຄ້າທີ່ຕ້ອງການຢືມເງິນ. ສ່ວນຜູ້ອຳນວຍການນັ້ນເປັນຜູ້ເບິ່ງຊ່ວຍໃຫ້ຄວາມແນະນຳກ່ຽວກັບເງິນຄຳແລະການລົງທຶນ.

<u>ການຊຳລະໃບເກັບເງິນ</u>

ທ່ານສາມາດຈ່າຍຄ່າໄຟຟ້າ, ໂທລະສັບ ແລະແກດສ໌ໂດຍທາງທະນາຄານແລະທາງບໍຣິສັດຫລັກສັບບາງບໍຣິສັດໄດ້. ທ່ານອາດຈຳຕ້ອງໄດ້ເສັຽຄ່າບໍຣິການແດ່ເລັກນ້ອຍ. ທ່ານຍັງສາມາດຊຳລະໃບເກັບເງິນຕ່າງໆໄດ້ໂດຍທາງເຊັກ ຫລືໂດຍຈ່າຍສົດໃຫ້ແກ່ບໍຣິສັດທີ່ກ່ຽວຂ້ອງບາດດຽວ.

ເມື່ອທ່ານຂຽນເຊັກ ໃຫ້ແນ່ໃຈວ່າທ່ານມີເງິນພຽງພໍໃນບັນຊີຂອງທ່ານສຳລັບຈ່າຍຄ່າເຊັກໃບດັ່ງກ່າວ. ໃນກໍຣະນີດັ່ງກັນຂ້າມແລ້ວ ເຊັກທີ່ທ່ານຂຽນກໍ່ຈະຖືກຖືວ່າບໍ່ມີເງິນພຽງພໍ ແລະທະນາຄານທ່ານກໍ່ຈະບໍ່ຍອມຈ່າຍແທນທ່ານ. ເຊັກທີ່ທ່ານຂຽນທີ່ບໍ່ມີເງິນພຽງພໍກໍ່ຈະຖືກສົ່ງຄືນໄປຫາທະນາຄານທີ່ຜູ້ຮັບເຊັກທ່ານຄືນທຳອິດນຳມາແຕກເອົາເງິນ ແລະທາງທະນາຄານດັ່ງກ່າວກໍ່ຈະຫັກຈຳນວນເງິນເຊັກນັ້ນອອກຈາກບັນຊີເງິນຂອງລາວທັນທີ. ມັນຈະສົ່ງບັນຫາໃຫ້ທ່ານ ແລະຜູ້ທີ່ທ່ານຈ່າຍເຊັກນັ້ນໃຫ້. ທ່ານອາດຈະຕ້ອງການສອບຖາມນຳທະນາຄານຂອງທ່ານວ່າ ພໍມີສອງທາງແນວໃດແດ່ທີ່ຈະໃຫ້ທາງທະນາຄານຮັບຈ່າຍຄ່າເຊັກທີ່ບໍ່ມີເງິນໝູນພຽງພໍຂອງທ່ານທີ່ທ່ານອາດຂຽນຈ່າຍໄປບາງຄັ້ງບາງຄາວຍ້ອນການຄາດຄິດຜິດ. ມັນເປັນຄວາມຜິດທາງດ້ານອາຍາທີ່ທ່ານຈະຂຽນເຊັກ ທັງທີ່ທ່ານຮູ້ຢ່າງເຕັມອົກວ່າເງິນໃນບັນຊີທ່ານນັ້ນບໍ່ມີພຽງພໍຈະຄ້ຳປະກັນໃບເຊັກດັ່ງກ່າວ.

<u>ເຊັກເດີນທາງ</u>

ເມື່ອທ່ານເດີນທາງ, ເພື່ອຄວາມປອດພັຍ, ທ່ານຄວນຖືເຊັກເດີນທາງແທນເງິນສົດ. ທ່ານສາມາດຫາຊື້ເຊັກເດີນທາງໄດ້ນຳທະນາຄານ ຫລືນຳບໍຣິສັດຫລັກສັບບ່ອນໃດບ່ອນນຶ່ງໄດ້ ແລະໃຊ້ພວກເຊັກດັ່ງກ່າວແລກເອົາເງິນສົດໄດ້ ເມື່ອທ່ານຕ້ອງການ. ທ່ານຕ້ອງເຊັນເຊັກພວກນີ້ໃນຕອນທີ່ທ່ານຊື້ ແລະທ່ານຈະບໍ່ສາມາດນຳເອົາເຂົາແລກເອົາເງິນໄດ້ ຕາບໃດທີ່ທ່ານບໍ່ໄດ້ເຊັນຊື່ລົງໄປອີກເປັນຄັ້ງທີສອງ ເພື່ອວ່າລາຍເຊັນຂອງທ່ານທັງສອງເທື່ອນັ້ນຈະຖືກນຳມາທຽບກັນເບິ່ງໄດ້. ຖ້າຫາກເຊັກທ່ານເສັຽ, ຖືກລັກ ຫລືຖືກທຳລາຍ ຜູ້ອອກເຊັກດັ່ງກ່າວກໍ່ຈະຄືນເງິນໃຫ້ແກ່ທ່ານ. ໃຫ້ທ່ານຮັກສາເລກລະດັບຂອງເຊັກໄວ້ບ່ອນນຶ່ງຕ່າງຫາກ ເພື່ອກັນເວລາເຊັກເສັຽຫາຍ. ທ່ານຍັງສາມາດເອົາເງິນການາດຽນປ່ຽນເອົາເງິນຕາຕ່າງປະເທດໄດ້ນຳຫ້ອງການກາງຂອງພວກທະນາຄານ ຫລືນຳບໍຣິສັດຫລັກສັບຕ່າງໆ.

head offices of banks or trust companies.

## Safety Deposit Boxes

Safety deposit boxes can be rented at a bank or trust company from about $8.00 a year and up, depending on size. This is a safe place to keep citizenship papers, mortgage papers, wills, insurance policies and other valuables. You are given two keys. No one at the bank can open your box without your key.

# INSURANCE

At some point in their lives, most people will consider buying insurance on their life, home, car or health. Insurance is a means of providing financial compensation for loss. By paying a fee or premium now, you insure that future events will not cause great financial hardship. This section outlines some of the things you should consider before signing a policy. Insurance terminology can be baffling to the layperson but it is worth your while to make the effort to understand exactly what type of protection you are buying.

## Buying an Insurance Policy

First of all, decide why you need insurance and what amount you require. Then investigate the types of policies available and decide which will be best suited to your needs. Talk to several agents and compare policies and prices. Before signing an application for a policy, make sure you understand all terms and conditions, including details of coverage, any restrictions, cancellation provisions and procedure for settling claims. Read the policy carefully. If there is anything you don't understand, ask for an explanation. Remember that an insurance policy is a legal document.

## ຕູ້ນິຣະພັຍ

ທ່ານສາມາດເຊົ່າຕູ້ນິຣະພັຍໄດ້ນຳທະນາຄານຫລືນຳບໍຣິສັດຫລັກສັບບ່ອນໃດບ່ອນນຶ່ງໄດ້ ໂດຍເສັຽຄ່າເຊົ່າຕັ້ງແຕ່ $໕ ຕໍ່ປີຫລືສູງກວ່ານັ້ນໄປ ແລ້ວແຕ່ຂນາດຂອງຕູ້ດັ່ງກ່າວ. ບ່ອນນີ້ແມ່ນບ່ອນປອດພັຍສຳລັບເກັບຮັກສາໃບສັນຍາ, ເອກກະສານມັດຈຳສັບສິນ, ພິນັຍກັມ, ເອກກະສານປະກັນຊີວິດ ສິ່ງຂອງມີຄ່າອື່ນໆ. ທ່ານຈະໄດ້ຮັບກະແຈສອງດອກ. ບໍ່ມີໃຜໃນທະນາຄານຈະເປີດຕູ້ຂອງທ່ານໄດ້ ຖ້າບໍ່ໃຊ້ກະແຈຂອງທ່ານ.

## ປະກັນພັຍ

ໃນຊ່ວງໃດຊ່ວງນຶ່ງຂອງຊີວິດຂອງພວກເຂົາເຈົ້າ ຄົນສ່ວນຫລາຍຄົງຈະພິຈາຣະນາຊື້ປະກັນພັຍສຳລັບຊີວິດ, ເຮືອນຊານ, ລົດລາ ຫລືສຸຂພາບຂອງພວກເຂົາເຈົ້າ. ການປະກັນພັຍແມ່ນວິທີຕອບແທນຄ່າເສັຽຫາຍ. ເມື່ອທ່ານຈ່າຍຄ່າທຳນຽມດຽວນີ້ ທ່ານປະກັນວ່າເຫດການໃນອະນາຄົດຈະບໍ່ເຮັດໃຫ້ທ່ານຕົກຢູ່ໃນຫນ້າລຳບາກທາງດ້ານເງິນຄຳຢ່າງໃດ. ພາກນີ້ແຜ່ຍາຍສ່ວນບາງຢ່າງທີ່ທ່ານຄວນພິຈາຣະນາກ່ອນທີ່ທ່ານຈະລົງມືເຊັນຮັບຊື້ແຜນໃດແຜນນຶ່ງ. ຄຳສັບກ່ຽວກັບການປະກັນພັຍອາດຈະຍາກແກ່ການເຂົ້າໃຈແດ່ສຳລັບຄົນພາຍນອກ ແຕ່ວ່າ ເຖິງຢ່າງໃດກໍຕາມ ມັນຈະໃຫ້ປໂຍດແກ່ທ່ານຫລາຍທີ່ທ່ານຈະພະຍາຍາມເຂົ້າໃຈໃຫ້ຄັກແນ່ວ່າແຜນທີ່ທ່ານຈະຊື້ນັ້ນມັນໃຫ້ການປ້ອງກັນແກ່ທ່ານແນວໃດແດ່.

## ການຊື້ແຜນປະກັນພັຍ

ກ່ອນອື່ນ ໃຫ້ທ່ານແນ່ໃຈວ່າເປັນຫຍັງທ່ານຈຶ່ງຕ້ອງການແຜນປະກັນພັຍ ແລະທ່ານຕ້ອງການຊື້ແຜນທີ່ມີຈຳນວນເງິນເທົ່າໃດ. ຕໍ່ມາ ໃຫ້ພິຈາຣະນາເບິ່ງແຜນທັງຫລາຍທີ່ມີໄວ້ໃຫ້ທ່ານເລືອກ ແລະຕັດສິນວ່າແຜນໃດຈະຕອບສນອງຄວາມຕ້ອງການຂອງທ່ານໄດ້ດີທີ່ສຸດ. ໃຫ້ລົມນຳພະນັກງານຂາຍປະກັນພັຍຫລາຍໆຄົນ ແລະເບິ່ງປຽບທຽບສິ່ງຊາແຜນແລະລາຄາໃຫ້ດີ. ກ່ອນຈະເຊັນຄຳຮ້ອງຂໍຊື້ແຜນໃດແຜນນຶ່ງ ໃຫ້ທ່ານແນ່ໃຈວ່າທ່ານເຂົ້າໃຈທຸກໆເງື່ອນໄຂ ຮວມທັງຂໍ້ປີກຍ່ອຍກ່ຽວກັບການປະກັນ, ຂໍ້ຈຳກັດຕ່າງໆ, ຂໍ້ກ່ຽວກັບການຖອນຕົວຈາກແຜນ ແລະລະບຽບການຊຳລະເງິນປະກັນ. ໃຫ້ອ່ານແຜນໃຫ້ດີ. ຖ້າມີແນວໃດແນວນຶ່ງທີ່ທ່ານບໍ່ເຂົ້າໃຈ ໃຫ້ຖາມຫາຄຳອະທິບາຍ. ໃຫ້ເຂົ້າໃຈວ່າແຜນປະກັນພັຍແມ່ນເອກກະສານທາງດ້ານກົດຫມາຍ.

## ແຜນປະກັນຊີວິດ

## Life Insurance

The main purpose of life insurance is to provide your dependents with an income if you die. It may also offer other benefits such as forced saving, retirement income, collateral for loans or low interest loans.

Things you should consider when evaluating your needs include: medical, legal and funeral expenses; support and education of your children; income for your spouse; adjustment fund for your spouse, in preparation for employment and/or for further education; and paying off the house mortgage. Decide what needs would exist five, 10, 15 and 20 years from now. Don't forget to take into account any group insurance, Canada Pension Plan benefits payable on death, savings or investments you may have. If you are self-employed or the owner of a small business in partnership with others, you and your partners should consider plans which allow those who survive to buy out the interest of any who dies.

## Riders

Many options or riders to your basic insurance are available at additional cost. The most common are:

- accidental death benefits - pays more than the face value of the policy if you die in an accident. "Double indemnity" means the beneficiary receives twice the face value.
- disability benefits - if you become totally disabled, you will not have to pay the premiums and the policy will remain in force. A second type of disability coverage pays a monthly income if you become disabled.
- guaranteed insurability - gives you the right to buy specified amounts of additional coverage at specified times, without a new medical examination.

ຈຸດປະສົງສ່ວນໃຫຍ່ຂອງການປະກັນຊີວິດກໍ່ແມ່ນຈັດລາຍໄດ້ໃຫ້ແກ່ຜູ້ທີ່ແມ່ນຕໍ່ທ່ານ ຖ້າທ່ານລົ້ມຫາຍຕາຍຈາກ. ການປະກັນຊີວິດນັ້ນຍັງອາດຈະໃຫ້ພົນແນວອື່ນໆອີກ ດັ່ງເຊັ່ນການທ້ອນຫ້ອມໄປໃນຕົວ, ລາຍໄດ້ຕອນເຈົ້າເຊົາອອກເຊົາການ, ແນວປະກັນສຳລັບເງິນຢືມຫລືສຳລັບເງິນຍືມທີ່ມີດອກເບ້ຍຕ່ຳ.

ນີ້ແມ່ນແນວທີ່ທ່ານຄວນພິຈາລະນາ ເມື່ອທ່ານວິໄຈຄວາມຕ້ອງການຂອງທ່ານ: ລາຍຈ່າຍກ່ຽວກັບການເຈັບການປ່ວຍ, ລາຍຈ່າຍກ່ຽວກັບການເຂົ້າຫາສານ ແລະລາຍຈ່າຍກ່ຽວກັບການຫມັ້ນຮົບຄາຍສົ່ງສະການ; ການລ້ຽງດູແລະການສົ່ງເສີມການສຶກສາຂອງລູກເຕົ້າຂອງທ່ານ; ລາຍໄດ້ສຳລັບຄູ່ຊີວິດຂອງທ່ານ; ລາຍໄດ້ສຳລັບຄູ່ຊີວິດຂອງທ່ານ ເພື່ອລາວຈະສາມາດຕຽມຫາການທຳງານ ຫລືສຶກສາຕໍ່; ແລະການຊຳລະຄ່າຊື້ເຮືອນຊານ. ໃຫ້ເບິ່ງວ່າທ່ານຈະມີຄວາມຕ້ອງການແນວໃດແດ່ໃນຫ້າປີ, ສິບປີ, ສິບຫ້າປີ ແລະຊາວປີຂ້າງໜ້າ. ຢ່າລືມນັບແຜນປະກັນຊີວິດແບບຫມູ່ແບບພວກທີ່ທ່ານອາດມີສ່ວນຢູ່ນຳ, ເງິນເບ້ຍບຳນານການາດາທີ່ທ່ານຈະໄດ້ຮັບ ເມື່ອທ່ານລົ້ມຫາຍຕາຍໄປ, ເງິນທີ່ທ່ານທ້ອນຫ້ອມໄວ້ ຫລືການລົງທຶນລົງຮອນຕ່າງໆທີ່ທ່ານອາດມີ. ຖ້າທ່ານມີກິດຈະການຂອງທ່ານເອງ ຫລືທ່ານເປັນເຈົ້າຂອງກິດຈະການນ້ອຍໆແນວນັ້ນຮ່ວມກັບຄົນອື່ນໆ ທ່ານແລະເພື່ອນຮ່ວມງານຄວນພິຈາລະນາແຜນທີ່ຈະອະນຸຍາດໃຫ້ຜູ້ທີ່ຍັງມີຊີວິດຢູ່ນັ້ນຊື້ເອົາສ່ວນຂອງຜູ້ລົ້ມຕາຍໄປ.

## ຂໍ້ເພີ່ມເຕີມ, ທາງເລືອກ

ຂໍ້ເພີ່ມເຕີມກ່ຽວກັບແຜນປະກັນຊີວິດພື້ນຖານຂອງທ່ານກໍ່ມີໄວ້ໃຫ້ທ່ານຊື້ຕື່ມໄດ້. ນີ້ແມ່ນສ່ວນນຶ່ງ:

- ເງິນສຳລັບການຕາຍເນື່ອງມາຈາກອຸບັດຕິເຫດ. ຂໍ້ນີ້ຈ່າຍເງິນໃຫ້ຫລາຍກວ່າຈຳນວນທີ່ບົ່ງໄວ້ໃນແຜນປະກັນ ຖ້າທ່ານລົ້ມຕາຍຍ້ອນອຸບັດຕິເຫດ. " Double Indemnity " ຫມາຍຄວາມວ່າຜູ້ຮັບເງິນປະກັນຈະໄດ້ຮັບເງິນສອງເທົ່າຂອງຈຳນວນທີ່ບົ່ງໄວ້ໃນແຜນປະກັນ.
- ເງິນພິການ. ຖ້າທ່ານເກີດເຊົາອອກເຊົາການບໍ່ໄດ້ເລີຍ ທ່ານກໍ່ບໍ່ຕ້ອງໄດ້ຈ່າຍຄ່າປະກັນ ແລະແຜນປະກັນຂອງທ່ານກໍ່ໃຊ້ການຕໍ່ໄປໄດ້. ແຜນປະກັນການພິການອີກແບບນຶ່ງນັ້ນຈ່າຍເງິນໃຫ້ທ່ານກິນເປັນເດືອນໆໄປ ເມື່ອທ່ານພິການລົງ.
- ປະກັນການຊື້ແຜນປະກັນພັຍເພີ່ມເຕີມ. ຂໍ້ນີ້ໃຫ້ສິດທ່ານຊື້ແຜນປະກັນເພີ່ມເຕີມໄດ້ໃນຈຳນວນທີ່ກຳນົດໄວ້ ແລະຕາມເວລາທີ່ກຳນົດໄວ້ ໂດຍບໍ່ຕ້ອງໄດ້ກວດສຸຂະພາບໃໝ່.

## Settlement Options

The method of payment of the proceeds of your insurance is specified by you when you purchase the policy: lump sum, monthly income or payable at a certain date or dates. The money may be used as the equivalent of a trust fund by making it payable upon certain conditions.

In addition to the uses already mentioned, life insurance may be used to save for your children's education, to defer taxes, to provide retirement income or to pay estate taxes or the mortgage on your house after your death. Ask your agent about the various ways of accomplishing these.

A word of caution. Think twice about cancelling your present life insurance policy and buying a new one. You may be better off changing or converting your policy, which most companies will be happy to do for you. When you buy a completely new policy you will have to start over again to accumulate cash values. Many waiting periods also start afresh with the new policy: the contestable period, usually two years, during which the company is entitled to question the statements made in the policy application; suicide clause - no benefits are payable if the policyholder commits suicide within a specified period; and others.

Under Ontario law, an agent is required to provide a statement of disclosure outlining the differences when an existing permanent life insurance policy is replaced with a new one. Never cancel your old policy until you are informed that the new one is in force.

## Disability or Income Protection Insurance

This type of insurance provides protection if you become disabled through accident or sickness. The considerations in deciding how much coverage you need are much the same as those for life insurance.

## ທາງເລືອກໃນການຮັບເງິນປະກັນ

ວິທີຈ່າຍເງິນປະກັນໃຫ້ທ່ານນັ້ນ ແມ່ນທ່ານເປັນຜູ້ເລືອກເອົາເອງຕອນທ່ານຊື້ແຜນປະກັນທີ່ວ່າ: ຈ່າຍໃຫ້ໝົດບາດດຽວ, ໃຫ້ເປັນເດືອນ ຫລືໃຫ້ຕາມວັນເດືອນປີທີ່ໄດ້ກຳນົດກັນໄວ້. ທ່ານອາດຕ້ອງການຮັກສາເງິນປະກັນທີ່ວ່າໄວ້ແບບດຽວກັນກັບເງິນຝາກ ໂດຍສັ່ງໃຫ້ຈ່າຍອອກໃຫ້ແກ່ຜູ້ຮັບເງິນປະກັນໄດ້ກໍຕໍ່ເມື່ອຜູ້ທີ່ວ່າເຮັດຕາມຂໍ້ແມ້ຕ່າງໆທີ່ໄດ້ກຳນົດໄວ້.

ນອກເໜືອໄປຈາກປໂຍດທີ່ເວົ້າມາແລ້ວ ທ່ານຍັງສາມາດໃຊ້ແຜນປະກັນຊີວິດຂອງທ່ານໄປໃນການທ້ອນທອມເງິນຄ່າເພື່ອການສຶກສາຂອງລູກເຕົ້າຂອງທ່ານ, ໄປໃນການພັກຜ່ອນເສັຽພາສີ, ໄປໃນການສ້າງທຶນສຳລັບຍາມເຈົ້າເຊົາເຮັດວຽກເຮັດການ ຫລືໄປໃນການຈ່າຍພາສີເຮືອນຊານຫລືຄ່າຊື້ເຮືອນຊານ ຫລັງຈາກທີ່ລົ້ມຕາຍໄປ. ໃຫ້ຖາມນຳຜູ້ຂາຍແຜນປະກັນໃຫ້ທ່ານກ່ຽວກັບວິທີຕ່າງໆທີ່ຈະພາໃຫ້ທ່ານສົມປະສົງໃນສິ່ງຕ່າງໆທີ່ເວົ້າມາຂ້າງເທິງ.

ຄຳເຕືອນ. ໃຫ້ຄິດລັກໆກ່ອນຈະລົ້ມເລີກແຜນປະກັນຊີວິດປັດຈຸບັນຂອງທ່ານແລ້ວຊື້ແຜນໃໝ່. ທ່ານອາດໄດ້ຮັບປໂຍດຫລາຍກວ່າ ຖ້າທ່ານພຽງແຕ່ປ່ຽນແຜນປະກັນຂອງທ່ານນຳບໍຣິສັດເກົ່າ. ບໍຣິສັດປະກັນພັຍສ່ວນຫລາຍຍິນດີທີ່ຈະຊ່ວຍເຫລືອທ່ານໃນເຣື່ອງນີ້. ເມື່ອທ່ານຊື້ແຜນປະກັນໃໝ່ ທ່ານຈະຕ້ອງໄດ້ເລີ້ມຕົ້ນໃໝ່ອີກເທື່ອນຶ່ງເພື່ອສະສົມເງິນໄວ້ໃນແຜນໃໝ່ດັ່ງກ່າວ. ເມື່ອຊື້ແຜນໃໝ່ ທ່ານກໍຈຳຕ້ອງໄດ້ຜ່ານການລໍຖ້າໃໝ່ ກ່ອນທີ່ແຜນປະກັນຂອງທ່ານຈະເຂົ້າຮູບເຂົ້າຮອຍ: ລະຍະເວລາທີ່ທາງບໍຣິສັດມີສິດຊັກຖາມຂໍ້ຄວາມໃນໃບຄຳຮ້ອງຂໍເຂົ້າແຜນນັ້ນ ຕາມທັມມະດາແລ້ວ ແມ່ນສອງປີ; ຂໍ້ຄວາມກ່ຽວກັບການຂ້າໂຕຕາຍ-ທາງບໍຣິສັດປະກັນພັຍຈະບໍ່ຈ່າຍເງິນໃດໆໃຫ້ແກ່ຜູ້ຮັບເງິນປະກັນເລີຍ ຖ້າຫາກວ່າເຈົ້າຂອງແຜນປະກັນນັ້ນຂ້າໂຕຕາຍພາຍໃນລະຍະເວລາທີ່ໄດ້ກຳນົດໄວ້; ແລະອື່ນໆ.

ຕາມກົດໝາຍຂອງແຂວງອົງຕາຣິໂອແລ້ວ ເຈົ້າໜ້າທີ່ຂາຍແຜນປະກັນພັຍຈຳຕ້ອງໄດ້ໃຫ້ລາຍລະອຽດແກ່ທ່ານກ່ຽວກັບຄວາມແຕກຕ່າງລະຫວ່າງແຜນປະກັນທີ່ທ່ານມີຢູ່ ແລະແຜນໃໝ່ທີ່ທ່ານຈະປ່ຽນເອົາ. ຢ່າລຶບລ້າງແຜນເກົ່າຂອງທ່ານຈັກເທື່ອ ຕາບໃດທີ່ທ່ານບໍ່ໄດ້ຖືກບອກໃຫ້ຮູ້ວ່າແຜນໃໝ່ຂອງທ່ານນັ້ນໃຊ້ການໄດ້ແລ້ວ.

## ແຜນປະກັນການພິການຫລືແຜນປະກັນລາຍໄດ້

ແຜນປະກັນພັຍແບບນີ້ໃຫ້ການປະກັນແກ່ທ່ານ ເມື່ອທ່ານເກີດພິການລົງຍ້ອນອຸບັດເຫດຫລືການເຈັບໄຂ້. ແນວທີ່ທ່ານຄວນພິຈາຣະນາກ່ອນຈະຕັດສິນໃຈວ່າທ່ານຕ້ອງການແຜນປະກັນໃນຈຳນວນທີ່ໃດນັ້ນ ສ່ວນຫລາຍກໍຄືກັນກັບແນວທີ່ໄດ້ເວົ້າມາກ່ຽວກັບແຜນປະກັນຊີວິດ.

The Canada and Quebec Pension Plans, unemployment insurance and workmen's compensation all provide disability insurance. Group insurance plans or life insurance policies may also provide this type of coverage. OHIP pays most medical bills for Ontario residents. Find out the details and amount of your present coverage before buying a personal disability policy.

The amount of disability insurance you may purchase is usually based on your income. Medical requirements are much more strict than for life insurance.

Property Insurance

Property insurance protects you financially against loss or damage to buildings, contents and personal belongings, damage that you cause to the property of others, injuries sustained by other people on your property or caused by members of your family.

The different types of insurance on your house, condominium, apartment or cottage are usually packaged together in a homeowner's or tenant's policy. Package policies are generally cheaper than buying separate policies for fire, theft and other risks.

The amount of insurance you should consider carrying on your home is at least 80% of the replacement cost of the building, not the sale value of the property. This figure may be determined by appraisal or by square-foot building costs in your area. With recent inflation in house values, coverage should be reviewed regularly.

To help determine the amount of coverage required on contents and personal belongings, add up the replacement cost, room by room, of everything you own. Keep in mind that payment is usually made on the basis of depreciated value. Most insurance companies will provide inventory check lists. List items and estimated value on the

ແຜນເບັ້ຍບຳນານຂອງການາດາແລະຂອງເກເບັກ, ແຜນເງິນຫວ່າງງານແລະແຜນເງິນຕອບແທນຄ່າບາດເຈັບໃນອຽກໃນການ ກໍພາກັນໃຫ້ການປະກັນການພິການ. ແຜນປະກັນພັຍແບບຣວມໝູ່ ຫລືແຜນປະກັນຊີວິດທັງຫລາຍກໍອາດມີການປະກັນແບບນີ້ກັນ. ແຜນປະກັນສຸຂພາບຂອງອົງຕາຣິໂອຈ່າຍຄ່າປິ່ນປົວຕົວສ່ວນໃຫຍ່ໃຫ້ແກ່ຄົນໃນແຂວງ. ໃຫ້ກວດເບິ່ງລາຍລະອຽດແລະຈຳນວນເງິນປະກັນຂອງແຜນປະກັນພັຍປັດຈຸບັນທ່ານກ່ອນ ກ່ອນທີ່ຈະຊື້ແຜນປະກັນການບໍຣິການແຜນໃດແຜນນຶ່ງ.

ແຜນປະກັນການພິການທີ່ທ່ານຈະຊື້ໄດ້ນັ້ນ ຕາມທັມມະດາແລ້ວ ຂຶ້ນນຳລາຍໄດ້ຂອງທ່ານ. ຂໍ້ແມ່ກ່ຽວກັບສຸຂພາບໃນແຜນນີ້ເຄັ່ງຄັດກວ່າໃນແຜນປະກັນຊີວິດ.

<u>ແຜນປະກັນສັບສິນ</u>

ແຜນປະກັນສັບສິນໃຫ້ການປ້ອງກັນແກ່ທ່ານໃນດ້ານເງິນຄຳ ເມື່ອເຮືອນຊານບ້ານຊ່ອງຂອງທ່ານ, ສິ່ງຂອງໃນເຮືອນຊານຂອງທ່ານ ແລະເຄື່ອງຂອງສ່ວນຕົວຂອງທ່ານເກີດຕົກເຮ່ຽເສັຽຫາຍ ຫລືເພພັງລົງ, ເມື່ອທ່ານກໍ່ຄວາມເສັຽຫາຍໃຫ້ແກ່ສັບສິນຂອງຄົນອື່ນ ແລະເມື່ອຜູ້ອື່ນໄດ້ຮັບບາດເຈັບໃນເຂດບ້ານທ່ານ ຫລືຍ້ອນສະມາຊິກຂອງຄອບຄົວທ່ານ.

ປະກັນພັຍຕ່າງໆກ່ຽວກັບເຮືອນ, ຫ້ອງແຖວ ຫລືເຮືອນພັກເຮືອນຂອງທ່ານນັ້ນ ຕາມທັມມະດາແລ້ວ ຖືກຮວບຮວມເຂົ້າໄວ້ໃນແຜນປະກັນແຜນດຽວເອີ້ນວ່າແຜນປະກັນພັຍສຳລັບເຈົ້າຂອງເຮືອນ ຫລືແຜນປະກັນພັຍສຳລັບຜູ້ເຊົ່າເຮືອນ. ໂດຍທົ່ວໄປແລ້ວ ແຜນພວກນີ້ຖືກກວ່າທີ່ທ່ານຈະຊື້ແຜນປະກັນສຳລັບແຕ່ລະຢ່າງໄປ ດັ່ງເຊັ່ນແຜນປະກັນໄຟໄໝ້, ແຜນປະກັນການລັກສັບ ແລະແຜນປະກັນແບບເສັຽຫາຍອື່ນໆ.

ຈຳນວນເງິນປະກັນທີ່ທ່ານຄວນພິຈາຣະນາຊື້ສຳລັບເຮືອນຊານທ່ານນັ້ນ ຢ່າງນ້ອຍຄວນເທົ່າກັບ ໘໐ ເປີເຊັນ ຂອງຄ່າປຸກສ້າງເຮືອນຫລັງດັ່ງກ່າວຄືນ, ບໍ່ແມ່ນຂອງລາຄາຂາຍຂອງມັນ. ທ່ານອາດຫາຕົວເລກດັ່ງກ່າວໄດ້ໂດຍການປະເມີນເອົາ ຫລືໂດຍການຖືເອົາຄ່າປຸກສ້າງເຮືອນຊານສຳລັບແຕ່ລະຕາລາງຟຸດໃນເຂດທ່ານເປັນຕົວຕັ້ງ. ບ່ອນວ່າຫວ່າງຫລັງນີ້ຄ່າເຮືອນຄ່າຊານຖີບຕົວຂຶ້ນສູງຫລາຍ ທ່ານຄວນໝັ່ນພິຈາຣະນາຈຳນວນເງິນປະກັນທີ່ທ່ານຊື້ສຳລັບເຮືອນຊານທ່ານ.

ເພື່ອຄຳນວນຈຳນວນເງິນປະກັນທີ່ທ່ານຄວນຊື້ສຳລັບເຄື່ອງພາຍໃນເຮືອນຊານແລະເຄື່ອງຂອງສ່ວນຕົວຂອງທ່ານ ໃຫ້ທ່ານສົມຄ່າຊື້ມາແທນຂອງສິ່ງຂອງທຸກສິ່ງທຸກຢ່າງຂອງທ່ານໃນແຕ່ລະຫ້ອງໄປ. ໃຫ້ເຂົ້າໃຈວ່າເງິນປະກັນທີ່ທ່ານຈະໄດ້ຮັບນັ້ນ ຕາມທັມມະດາແລ້ວ ຖືກຄຳນວນຕາມຄ່າສັບສິນທີ່ຖືກລົດຄ່າແລ້ວ. ບໍຣິສັດປະກັນພັຍສ່ວນຫລາຍຈະໃຫ້ລາຍຊື່ງຂອງພາຍໃນເຮືອນແກ່ທ່ານກວດເບິ່ງ. ໃຫ້

form and keep it in your safety deposit box or other safe place away from your home in case of a future claim.

Personal liability insurance, usually included in package policies, provides protection if you or a member of your family cause property damage, death or injury to others. This provision also pays legal fees if you are sued for negligence. The amount of personal liability insurance you carry should reflect your financial worth, activity and your property.

## TAXES

### Income Tax

The federal government collects income tax on behalf of itself and the provincial government. If you have an income over a certain amount, you must report your earnings on an income tax form. Income may be from wages, certain employment benefits, rentals or investments such as the dividends on stocks and interest on bonds and bank accounts. You are also required to report tips and part-time earnings beyond your regular income. There is a tax on 50% of anyone's capital gains during the year. This is profit made by selling something for more than was paid for it. The house you own and live in is exempt from capital gains tax.

### Exemptions

You can claim various exemptions or credits on your income tax form, including:

- Dependent spouses and children. An immigrant whose family has not yet arrived should get in touch with the local income tax office to see about claiming exemption for them.

ທ່ານຈົດຊື່ສິ່ງຂອງຂອງທ່ານພ້ອມດ້ວຍຄ່າທີ່ປະເມີນແລ້ວຂອງພວກມັນລົງໃສ່ໃນແບບພິມທີ່ວ່າ ແລະເກັບຮັກສາໄວ້ໃນຕູ້ນິຣະພັຍຂອງທ່ານ ຫລືໃນສະຖານທີ່ປອດພັຍອື່ນໆໄກຈາກເຮືອນທ່ານ ເພື່ອປະກັນການທວງເອົາເງິນປະກັນໃນພາຍໜ້າ.

ແຜນປະກັນແນວເສັຽຫາຍທີ່ຕົວບຸກຄົນເປັນຜູ້ກໍ່ຂຶ້ນນັ້ນ, ຕາມທັມມະດາແລ້ວຮວມຢູ່ນຳແຜນປະກັນຮວມທັງຫລາຍ, ໃຫ້ການປະກັນແກ່ທ່ານໃນກໍຣະນີທີ່ຕົວທ່ານ ຫລືສະມາຊິກໃນຄອບຄົວຂອງທ່ານຄົນໃດຄົນນຶ່ງກໍ່ຄວາມເສັຽຫາຍທາງດ້ານສັບສິນ ແລະກໍ່ໃຫ້ມີຄວາມເຈັບປວດ ຫລືການຕາຍເກີດຂຶ້ນແກ່ຄົນອື່ນ. ແຜນນີ້ຍັງຈ່າຍຄ່າຂຶ້ນໂຮງຂຶ້ນສານໃຫ້ແກ່ທ່ານອີກ ຖ້າທ່ານຫາກຖືກຟ້ອງຮ້ອງຍ້ອນການຂາດຄວາມລະມັດລະວັງຂອງທ່ານ. ແຜນປະກັນແບບນີ້ຂອງທ່ານຄວນເໝາະສົມກັບສະຖານະການທາງດ້ານສັບສິນເງິນຄຳຂອງທ່ານ.

ພາສີແບບຕ່າງໆ

ລັດຖະບານກາງເປັນຜູ້ເກັບພາສີລາຍໄດ້ ສຳລັບຕົວເອງແລະສຳລັບລັດຖະບານແຂວງ. ຖ້າທ່ານມີລາຍໄດ້ທີ່ເກີນຈຳນວນໃດຈຳນວນນຶ່ງແລ້ວ ທ່ານຕ້ອງແຈ້ງລາຍໄດ້ດັ່ງກ່າວຂອງທ່ານໃນແບບພິມພາສີລາຍໄດ້. ລາຍໄດ້ນີ້ອາດມາຈາກຄ່າຈ້າງອອກແຮງງານ, ເງິນພິເສດບາງຢ່າງທີ່ໄດ້ຈາກອາຊີບການທີ່ເຮັດ, ຄ່າເຊົ່າ ຫລືເງິນທີ່ໄດ້ມາຈາກການລົງທຶນຕ່າງໆ ດັ່ງເຊັ່ນເງິນປັນຜົນຈາກຫຸ້ນ ແລະດອກເບັ້ຽຈາກພັນທະບັດແລະບັນຊີເງິນໃນທະນາຄານ. ທ່ານຍັງຈະຕ້ອງໄດ້ແຈ້ງລາຍໄດ້ອື່ນໆທີ່ຢູ່ນອກເໜືອລາຍໄດ້ປະຈຳຂອງທ່ານອີກ ດັ່ງເຊັ່ນຈຳນວນຄ່າບໍຣິການທີ່ທ່ານໄດ້ຮັບ ແລະເງິນທີ່ທ່ານໄດ້ມາຈາກການເຮັດວຽກແບບບໍ່ເຕັມເວລາຂອງທ່ານ. ທາງການເກັບພາສີນຳຈຳນວນເງິນທີ່ເທົ່າກັບ 50% ຂອງກຳໄລທີ່ໄດ້ຈາກການຂາຍສັບສິນບາງແນວຂອງທຸກໆຄົນພາຍໃນຕົວປີ. ເຮືອນທີ່ທ່ານຢູ່ແລະທີ່ທ່ານເປັນເຈົ້າຂອງຂອງນັ້ນຖືກຍົກເວັ້ນຈາກພາສີທີ່ວ່າ.

ແນວຍົກເວັ້ນພາສີ

ໃນແບບພິມພາສີລາຍໄດ້ນັ້ນ ມີຫລາຍສິ່ງຫລາຍຢ່າງທີ່ທ່ານສາມາດຂໍຍົກເວັ້ນພາສີໄດ້. ນີ້ແມ່ນສ່ວນນຶ່ງ:

- ຄູ່ສົມຣົດແລະລູກເຕົ້າທີ່ແມ່ນຕໍ່ທ່ານ. ຜູ້ເຂົ້າເມືອງໃໝ່ທີ່ຄອບຄົວຍັງບໍ່ທັນມາເຖິງເທື່ອຄວນເຂົ້າຫາຫ້ອງການພາສີລາຍໄດ້ທ້ອງຖິ່ນ ເພື່ອສອບຖາມລາຍລະອຽດກ່ຽວກັບການຍົກເວັ້ນຕ່າງໆທີ່ຕົນອາດຈະໄດ້ຮັບ.

- Child care expenses, under certain conditions. Parents entitled to deductions should obtain receipts. These must include the social insurance number of the person caring for the children.
- Persons 65 years of age and over.
- Some personal employment expenses, such as tools, equipment, books and an office in your home if you are self-employed.
- University, college and some other tuition fees.
- Contributions to the Canada Pension Plan, and the unemployment insurance fund.
- Contributions to registered retirement plans.
- Contributions to registered retirement savings plans and registered home ownership savings plans. You can get more information on these from banks and trust companies. Be sure to research them carefully before putting money into a plan.
- Union or professional organization dues.
- There is a basic deduction for charitable donations and medical expenses. You should save receipts for these in case you have spent more than the basic deduction.
- Contributions to registered Canadian political parties.

Taxation Year

Income tax forms must be returned between January 1 and April 30 of each year for the income for the previous year. There are fines for late returns and penalties for knowingly making false declarations.

Payment

Employers deduct income tax from their employees' pay and send it to the taxation office. By March 1, they must give each worker a T4 form showing gross earnings, other deductions, and how much income tax has been taken off. The worker will also receive T5 forms

- ລາຍຈ່າຍກ່ຽວກັບການຝາກລ້ຽງເດັກ, ພາຍໃຕ້ຂໍ້ແມ້ບາງແນວ. ພວກພໍ່ແມ່ທີ່ໄດ້ຮັບການຍົກເວັ້ນໃນກໍຣະນີ້ ຄວນຮັກສາໃບຮັບເງິນໄວ້. ໃບຮັບເງິນດັ່ງກ່າວຄວນມີເລກປະຈຳຕົວຂອງຜູ້ທີ່ຮັບລ້ຽງເດັກຢູ່ນຳ.
- ຜູ້ທີ່ມີອາຍຸຕັ້ງແຕ່ ໖໕ ປີ ຂຶ້ນໄປ.
- ລາຍຈ່າຍສ່ວນຕົວກ່ຽວກັບວຽກງານບາງຢ່າງ ດັ່ງເຊັ່ນຄ່າເຄື່ອງມື, ຄ່າເຄື່ອງປະກອບ, ຄ່າປີ້ມແລະຄ່າຫ້ອງການພາຍໃນເຮືອນທ່ານ ຖ້າຫາກວ່າທ່ານມີກິຈການຂອງຕົນເອງ.
- ຄ່າຮຽນໃນມະຫາວິທຍາລັຍ, ວິທຍາລັຍ ແລະສະຖາບັນການສຶກສາອື່ນໆບາງແນວ.
- ຄ່າແຜນເບ້ຍບຳນານການາດາ ແລະຄ່າແຜນເງິນຫວ່າງງານ.
- ຄ່າແຜນປະກັນຍາມອອກລາອອກການແບບລົງທະບຽນ.
- ຄ່າແຜນອອມສິນສຳລັບຍາມອອກລາອອກການແບບລົງທະບຽນ ແລະຄ່າແຜນອອມສິນເພື່ອຊື້ຢ້າວຊື່ເຮືອນແບບລົງທະບຽນ. ທ່ານສາມາດຫາລາຍລະອຽດເພີ່ມຕື່ມກ່ຽວກັບເຣື່ອງນີ້ໄດ້ນຳພວກທະນາຄານ ແລະພວກບໍຣິສັດຫລັກຊັບທັງຫລາຍ. ໃຫ້ສຶກສາເບິ່ງແຜນຕ່າງໆໃຫ້ດີ ກ່ອນທີ່ຈະເອົາເງິນເຂົ້າແຜນໃດແຜນນຶ່ງ.
- ຄ່າສະມາຊິກສະຫະພາບແຮງງານ ຫລືຄ່າສະມາຄົມອາຊີບ.
- ມີຈຳນວນເງິນຍົກເວັ້ນພື້ນຖານສຳລັບການບໍຣິຈາກໃນທາງບຸນກຸສົນ ແລະສຳລັບລາຍຈ່າຍທີ່ກ່ຽວກັບການປິ່ນປົວຕົວ. ທ່ານຄວນຮັກສາໃບຮັບເງິນໄວ້ໃນກໍຣະນີທີ່ທ່ານຈ່າຍເກີນຈຳນວນຍົກເວັ້ນພື້ນຖານ.
- ເງິນບໍຣິຈາກແກ່ພັກການເມືອງການາດຽນທີ່ລົງທະບຽນທັງຫລາຍ.

<u>ສົກປີພາສີ</u>

ທ່ານຕ້ອງສົ່ງແບບພິມພາສີລາຍໄດ້ລະຫວ່າງວັນທີ່ ໑ ເດືອນມົກກະຣາ ແລະວັນທີ່ ໓໐ ເດືອນເມສາຂອງທຸກໆປີ ສຳລັບລາຍໄດ້ຂອງປີທີ່ຜ່ານມາ. ທ່ານຈະຖືກໄຫມ ຖ້າທ່ານສົ່ງຊ້າ ແລະທ່ານຈະຖືກລົງໂທດ ຖ້າທ່ານຕັ້ງໃຈລາຍງານລາຍໄດ້ຂອງທ່ານໄປໃນທາງທີ່ຜິດ.

<u>ການຈ່າຍພາສີລາຍໄດ້</u>

ນາຍຈ້າງເປັນຜູ້ຫັກພາສີລາຍໄດ້ອອກຈາກລາຍໄດ້ຂອງລູກຈ້າງ ແລ້ວສົ່ງໄປຍັງຫ້ອງການພາສີລາຍໄດ້. ນາຍຈ້າງທຸກໆຄົນຕ້ອງເອົາໃບ T4 ໃຫ້ລູກຈ້າງແຕ່ລະຄົນຂອງຕົນ ບໍ່ໃຫ້ກາຍວັນທີ່ ໑

from the bank or forms from other investments to show other earnings. These forms must be included with the income tax return. If you find you still owe taxes or too little tax has been paid, the money owing should be enclosed with your return. If you have overpaid your tax, the office will send a refund by cheque.

The staff in your local income tax office will give information, either personally or by telephone, to people having difficulty filling in income tax forms. Most of them have workers who speak several languages.

Ontario Tax Credit System

This program consists of four credits. Through this program, you can receive money back for occupancy costs, paid in rent or taxes. You can also receive a sales tax credit, which is equal to 1% of your personal deductions. Senior citizens receive a special tax credit. You may also claim a tax credit based on contributions to a registered Ontario political party; be sure to keep official receipts.

These tax credits can be of benefit even if you have no taxable income. It is necessary, however, to complete an income tax return and fill out the appropriate tax credit form included in the income tax package.

Income Tax Clinics

In a number of cities and towns in Ontario, income tax clinics are held in the evening to help people on low income or those who don't speak English to fill in income tax forms. These are set up by local community organizations which arrange the locations and the hours. In areas where there are large numbers of immigrants, they usually arrange to have interpreters present. The people who

ເດືອນນີ້ມາ. ໃນໃບ T4 ນັ້ນມີລາຍລະອຽດກ່ຽວກັບລາຍໄດ້ທັງໝົດ, ຈຳນວນເງິນທີ່ຫັກອອກສຳລັບຄ່າຕ່າງໆ, ແລະຈຳນວນພາສີລາຍໄດ້ທັງໝົດທີ່ຫັກອອກ. ຄົນງານຍັງຈະໄດ້ຮັບໃບ T4 ຈາກທະນາຄານ ຫລືຈາກສະຖາບັນການລົງທຶນອື່ນໆອີກ. ໃບ T4 ນັ້ນບອກເຖິງລາຍໄດ້ແນ່ນອນຂອງຄົນງານທີ່ມີດັ່ງກ່າວ. ທ່ານຕ້ອງແນບໃບຕ່າງໆພວກນີ້ໄປກັບແບບພິມພາສີລາຍໄດ້ຂອງທ່ານ. ຖ້າທ່ານພໍ້ວ່າທ່ານຈ່າຍພາສີໄປບໍ່ພຽງພໍ ທ່ານກໍຄວນສົ່ງຈຳນວນເງິນທີ່ເອົາຕິດໄປພ້ອມແບບພິມພາສີລາຍໄດ້ຂອງທ່ານ. ຖ້າທ່ານຈ່າຍພາສີຫລາຍເກີນໄປ ທາງຫ້ອງການພາສີລາຍໄດ້ກໍຈະສົ່ງຈຳນວນເກີນຄືນໃຫ້ທ່ານທາງເຊັກ.

ພະນັກງານປະຈຳຢູ່ຫ້ອງການພາສີລາຍໄດ້ຂອງທ້ອງຖິ່ນທ່ານຈະໃຫ້ລາຍລະອຽດຕ່າງໆ, ດ້ວຍຕົນເອງ ຫລືໂດຍທາງໂທລະສັບ, ແກ່ບຸກຄົນທີ່ມີບັນຫາໃນການບັນຈຸຂໍ້ຄວາມໃສ່ໃນແບບພິມພາສີລາຍໄດ້. ຫ້ອງການພວກນີ້ ສ່ວນຫລາຍ ມີພະນັກງານທີ່ປາກໄດ້ຫລາຍພາສາ.

<u>ລາຍການຫລຸດຜ່ອນພາສີອົງຕາຣິໂອ</u>

ລາຍການນີ້ມີຂໍ້ຫລຸດຜ່ອນນຳກັນສີ່ຂໍ້. ໂດຍຜ່ານທາງລາຍການນີ້ ທ່ານຈະສາມາດໄດ້ຮັບເງິນຄ່າຢູ່ຄ່າເຊົ່າທີ່ຈ່າຍໄປໃນຮູບຄ່າເຊົ່າເຮືອນ ຫລືພາສີນັ້ນຄືນ. ທ່ານຍັງຈະສາມາດໄດ້ຮັບການຍົກເວັ້ນພາສີການຄ້າອີກ. ການຍົກເວັ້ນດັ່ງກ່າວນີ້ເທົ່າກັບ ໑% ຂອງການຍົກເວັ້ນສ່ວນຕົວຕ່າງໆຂອງທ່ານ. ຜູ້ອາວຸໂສກໍໄດ້ຮັບການຍົກເວັ້ນທາງດ້ານພາສີພິເສດແນວນັ້ນຄືກັນ. ທ່ານຍັງຈະສາມາດໄດ້ຮັບການຍົກເວັ້ນທາງດ້ານພາສີອີກ ເມື່ອທ່ານບໍຣິຈາກແກ່ພັກການເມືອງທີ່ລົງທະບຽນພັກໃດພັກນຶ່ງໃນອົງຕາຣິໂອ; ຢ່າລືມຮັກສາໃບຮັບເງິນໄວ້.

ແນວຍົກເວັ້ນພາສີຕ່າງໆທີ່ເວົ້າມານີ້ອາດເປັນປໂຍດແກ່ທ່ານ ເຖິງແມ່ນວ່າທ່ານຈະບໍ່ມີລາຍໄດ້ພໍທີ່ທາງການຈະເກັບພາສີນຳກໍຕາມ. ແຕ່ມັນຈຳເປັນທີ່ທ່ານຈະຕ້ອງຂຽນແບບພິມພາສີລາຍໄດ້ ແລະ ແບບພິມຍົກເວັ້ນພາສີທີ່ກ່ຽວຂ້ອງທີ່ມີຢູ່ໃນຊຸດເອກກະສານຂຽນສົ່ງພາສີລາຍໄດ້.

<u>ລາຍການຊ່ວຍຂຽນສົ່ງໃບແຈ້ງພາສີລາຍໄດ້</u>

ໃນເມືອງໃຫຍ່ແລະເມືອງນ້ອຍຫລາຍໆບ່ອນທົ່ວອົງຕາຣິໂອ ພວກຜູ້ຄົນທີ່ມີລາຍໄດ້ຕ່ຳ ຫລືພວກທີ່ປາກພາສາອັງກິດບໍ່ໄດ້ມີບ່ອນທີ່ພວກເຂົາເຈົ້າໄປຫາໄດ້ໃນຕອນຄ່ຳເພື່ອຂໍຄວາມຊ່ວຍເຫລືອໃນການຂຽນສົ່ງແບບພິມພາສີລາຍໄດ້. ທາງການຈັດຕັ້ງຊຸມຊົນຕ່າງໆຂອງທ້ອງຖິ່ນເປັນຜູ້ຈັດແຈງໃຫ້ການບໍຣິການດັ່ງກ່າວພ້ອມທັງກຳນົດເວລາແລະສະຖານທີ່. ໃນໝູ່ພວກເຂົ້າເມືອງໃໝ່ຫລາຍ ການຈັດຕັ້ງທີ່ວ່າກໍຈັດໃຫ້ມີນາຍພາສາໄວ້ໃຫ້ການບໍຣິການນຳ. ຜູ້ທີ່ຊ່ວຍທ່ານຂຽນແບບພິມພາສີລາຍໄດ້ນັ້ນ ແມ່ນ

help you fill out the forms are qualified accountants who give their services free of charge. If you have a low income and you need assistance, ask an information centre or immigrant aid agency if there is such a clinic in your community.

Selling Your Income Tax Refund

There may be agencies in your area which offer to buy your refund before you send in your income tax form. This may appear attractive, particularly if it is hard for you to wait for the government to send your refund. However, in the long run, you are losing money. These agencies give you less than the amount which will be refunded by the government. They may even not tell you how much money you are actually entitled to. Make sure you do not mistake one of these agencies for an income tax clinic. Always mail your form personally.

Sales Tax

Many articles which you buy have a 7% provincial sales tax added. Some items are exempt, such as children's clothing, newspapers, food products, housing, prescription drugs, classroom supplies, electricity and certain other such items. A tax is added to restaurant meals costing more than $6.00 and alcoholic beverages. There is a federal tax included in the price of most commodities.

Property Tax

Every one who owns property pays taxes to the municipality. This goes mainly to the cost of education, police and fire protection, garbage collection, the upkeep of roads, streets and parks. The more valuable the property, the more the owner pays. Mortgage payments on a house often, but not always, include taxes. Tenants contribute to the landlord's taxes through their rent.

Usually taxes can be paid in installments spread over three,

ນາຍສົມທົບຈຸດໝາຍທີ່ບຸກຄົນໃຫ້ການບໍລິການແກ່ທ່ານໂດຍບໍ່ຮຽກຄ່າຈ້າງແຕ່ຢ່າງໃດ. ຖ້າທ່ານມີລາຍໄດ້ຕ່ຳ ແລະທ່ານຕ້ອງການຄວາມຊ່ວຍເຫຼືອແລ້ວ ໃຫ້ຖາມສູນໃຫ້ລາຍລະອຽດທ້ອງຖິ່ນ ຫຼືອົງການຊ່ວຍເຫຼືອພວກເຂົ້າເມືອງໃຫມ່ເອີ້ນໃດເອີ້ນນຶ່ງວ່າໃນທ້ອງຖິ່ນທ່ານນັ້ນມີບ່ອນໃຫ້ການບໍລິການໃນດ້ານນີ້ຫຼືບໍ.

<u>ການຂາຍເງິນທີ່ທ່ານຈະໄດ້ຄືນຈາກການເສັຽພາສີລາຍໄດ້ຂອງທ່ານ</u>

ອາດມີບໍລິສັດຫຼາຍໆບໍລິສັດໃນເຂດທ່ານທີ່ຕ້ອງການຊື້ເງິນທີ່ທ່ານຈະໄດ້ຄືນຈາກຣັຖບານ ກ່ອນທີ່ທ່ານຈະສົ່ງໃບແຈ້ງພາສີລາຍໄດ້ຂອງທ່ານຄືນໄປ. ນີ້ອາດເປັນຫນ້າດຶງດູດ ໂດຍສະເພາະຢ່າງຍິ່ງເມື່ອມັນເປັນການລໍາບາກສໍາລັບທ່ານທີ່ຈະລໍຖ້າໃຫ້ທາງຣັຖບານສົ່ງເງິນທີ່ທ່ານຈະໄດ້ຄືນມາໃຫ້ທ່ານ. ບໍລິສັດພວກນີ້ໃຫ້ທ່ານຫນ້ອຍກວ່າຈໍານວນທີ່ທ່ານຈະໄດ້ຄືນຈາກຣັຖບານ ແລະອາດຈະບໍ່ບອກທ່ານຊໍ້າວ່າເງິນທີ່ທ່ານຈະໄດ້ຄືນນັ້ນມີຈໍານວນທີ່ແທ້ຈິງເທົ່າໃດ. ໃຫ້ແນ່ໃຈວ່າ ທ່ານບໍ່ຫຼົງວ່າບໍລິສັດໃດບໍລິສັດນຶ່ງໃນຈໍາພວກນີ້ແມ່ນບ່ອນໃຫ້ຄວາມຊ່ວຍເຫຼືອທາງດ້ານຂຽນສົ່ງໃບແຈ້ງພາສີລາຍໄດ້ທີ່ບໍ່ຮຽກຄ່າຈ້າງລາງວັນແຕ່ຢ່າງໃດ. ໃຫ້ສົ່ງໃບແຈ້ງພາສີລາຍໄດ້ຂອງທ່ານດ້ວຍຕົນເອງສເມີ.

<u>ພາສີການຄ້າ</u>

ຄ່າຂອງສິ່ງຂອງຫຼາຍສິ່ງຫຼາຍແນວທີ່ທ່ານຊື້ນັ້ນມີພາສີການຄ້າຂອງແຂວງຣວມຢູ່ນໍາ. ມີສິ່ງຂອງບາງຢ່າງທີ່ຖືກຍົກເວັ້ນ ດັ່ງເຊັ່ນເຄື່ອງນຸ່ງຫົ່ມເດັກນ້ອຍ, ຫນັງສືພິມ, ພືດຜົນທາງດ້ານອາຫານ, ທີ່ຢູ່ອາໄສ, ຢາທີ່ທ່ານຫມໍສັ່ງໃຫ້, ເຄື່ອງໃຊ້ປະຈໍາຫ້ອງຮຽນ, ໄຟຟ້າ ແລະອື່ນໆ. ຄາບເຂົ້າໃນຮ້ານອາຫານທີ່ແພງກວ່າ $6 ແລະເຫຼົ້າມີພາສີຕ້ອງຈ່າຍນໍາ. ໃນລາຄາຂອງສິ່ງຂອງສ່ວນຫຼາຍນັ້ນມີພາສີຂອງຣັຖບານກາງຣວມຢູ່ນໍາ.

<u>ພາສີຊັບສິນ</u>

ທຸກໆຄົນທີ່ເປັນເຈົ້າຂອງເຮືອນຊານນັ້ນເສັຽພາສີໃຫ້ແກ່ທາງເທສບານ. ເງິນທີ່ໄດ້ມາຈາກພາສີນີ້ຖືກໃຊ້ໄປໃນການຄໍ້າປະກັນລາຍຈ່າຍທາງດ້ານການສຶກສາ, ການຮັກສາຄວາມສງົບ, ການປ້ອງກັນຟືນໄຟ, ການຮັກສາຄວາມສະອາດ, ການຮັກສາສະພາບຂອງຖະຫນົນຫົນທາງແລະສວນສາທາຣະນະ. ເຮືອນຊານມີຄ່າຫຼາຍເທົ່າໃດ ຜູ້ເປັນເຈົ້າຂອງກໍໄດ້ເສັຽພາສີຫຼາຍຂຶ້ນໄປນໍາເປັນລໍາດັບ. ຄ່າເຊົ່າເຮືອນຊານທີ່ທ່ານຈ່າຍໄປນັ້ນມີພາສີຣວມຢູ່ນໍາ. ພວກຜູ້ເຊົ່າເຮືອນອອກຊ່ວຍພາສີດັ່ງກ່າວຂອງເຈົ້າຂອງເຮືອນໂດຍທາງຄ່າເຊົ່າ.

ຕາມທັມມະດາແລ້ວ ທ່ານສາມາດຂໍເສັຽພາສີທ່ານໄດ້ສາມ, ສີ່, ຫຼືຫົກງວດຕໍ່ປີ. ຖ້າທ່ານ

four or six payments a year. If payment is late, interest is charged which increases until the payment is made. If taxes are unpaid for three years in a row, the municipality can sell the property to recover the taxes and late-payment charges. For further information regarding property taxes, get in touch with the city, town or township clerk in your municipal office.

ຈ່າຍຊ້າ ທ່ານຕ້ອງໄດ້ເສັຽດອກເບັ້ຽ. ດອກເບັ້ຽນີ້ຈະສູງຂຶ້ນເລື້ອຍໆຈົນກວ່າວ່າທ່ານຈະຈ່າຍ. ຖ້າທ່ານບໍ່ໄດ້ຈ່າຍພາສີເຖິງສາມປີຕິດຕໍ່ກັນ ທາງເທສບານກໍສາມາດຂາຍເຮືອນຊານທ່ານ ເພື່ອຫັກເອົາພາສີແລະຄ່າທຳທ່ານຈ່າຍບໍ່ທັນເວລາ. ເພື່ອລາຍລະອຽດເພີ່ມເຕີມກ່ຽວກັບພາສີສັບສິນ ໃຫ້ຕິດຕໍ່ນຳເຈົ້າໜ້າທີ່ຂອງຫ້ອງການເທສບານໃນເຂດທ່ານ.

# AUTOMOBILES

Many people would like to own and drive their own car as soon as possible. A car is sometimes a necessity for a family but it can be a very expensive item. When you do buy it, you must make sure you are getting your money's worth.

## LEARNING TO DRIVE

### Licence for Learners (Class "L")

You must get a Class "L", or learner's licence, before learning to drive. This is valid for one year. During this time, you must always have a person with a valid Ontario driver's licence in the seat beside you while driving. Application forms for a Class "L" driver's licence can be obtained at any driver examination centre of the Ontario Ministry of Transportation and Communications. As of December, 1980, a Class "L" driver's licence costs $12.00. This fee includes your vision test, written or oral test and your road test when you finally take it.

A person who is 16, but not yet 17, must have the signed consent of a parent or guardian to get a Class "L" or Class "G" driver's licence. There is a place for the signature on the back of the application form.

You can get the Driver's Handbook at any driver examination centre of the Ministry of Transportation and Communications, listed under "Government of Ontario" in the blue pages at the back of the telephone directory. The free booklet explains Ontario's driving laws and good safety practices. Study it carefully before applying for a Class "L" or Class "G" driver's licence. You will have to take a test in English or French before you qualify. You can take a dictionary with you.

### Finding a Good Driving School

If you are a young person, you should consider taking a driver

# ລົດລາ

ຫລາຍຄົນຕ້ອງການຢາກເປັນເຈົ້າຂອງແລະຂັບລົດຂອງເຂົາເຈົ້າເອງໄວທີ່ສຸດທີ່ຈະໄວໄດ້. ບາງເທື່ອລົດກໍເປັນສິ່ງຈຳເປັນສຳລັບຄອບຄົວ ແຕ່ວ່າມັນອາດເປັນສິ່ງທີ່ແພງຫລາຍ. ເມື່ອທ່ານຕັດສິນໃຈຊື້ມັນແລ້ວ ທ່ານຕ້ອງແນ່ໃຈວ່າທ່ານໄດ້ແນວທີ່ສົມເງິນສົມຄ່າທ່ານ.

## ການຮຽນຂັບ

### ໃບອະນຸຍາດຮຽນຂັບ (ຊັ້ນ"L" )

ກ່ອນທີ່ຈະຮຽນຂັບ ທ່ານຕ້ອງໄດ້ໃບອະນຸຍາດຮຽນຂັບ (ຊັ້ນ"L") ກ່ອນ. ໃບອະນຸຍາດທີ່ວ່ານີ້ໃຊ້ໄດ້ປີນຶ່ງ. ໃນລະຍະຮຽນຂັບນັ້ນ ທ່ານຕ້ອງມີຜູ້ທີ່ມີໃບຂັບຂີ່ຍັງໃຊ້ໄດ້ຢູ່ຂອງອົງຕາຣິໂອນັ່ງຮ່ວມຂ້າງຕລອດເວລາ. ທ່ານຈະຫາໃບຄຳຮ້ອງຂໍໃບອະນຸຍາດຮຽນຂັບໄດ້ນຳສູນສອບການຂັບລົດທຸກງບ່ອນຂອງກະຊວງຂົນສົ່ງແລະຄົມມະນາຄົມຂອງອົງຕາຣິໂອ. ຕັ້ງແຕ່ເດືອນທັນວາຄົມ, ໑໙໘໐, ເປັນຕົ້ນມາ ຄ່າທຳນຽມສຳລັບໃບອະນຸຍາດຮຽນຂັບຊັ້ນ "L" ນັ້ນແມ່ນ $໑໔.໐໐. ຄ່າທຳນຽມທີ່ວ່ານີ້ຮວມທັງຄ່າກວດສອບສາຍຕາ, ຄ່າສອບພາກຂຽນຫລືພາກປາກເປົ່າ ແລະຄ່າພາກຂັບເມື່ອເວລາມາເຖິງ.

ຜູ້ທີ່ມີອາຍຸ ໑໖ປີ ແຕ່ວ່າຍັງບໍ່ທັນເຖິງ ໑໘ປີ ເທື່ອນັ້ນ ຕ້ອງມີໃບອະນຸຍາດພ້ອມດ້ວຍລາຍເຊັນຈາກພໍ່ແມ່ຫລືຜູ້ປົກຄອງ ກ່ອນທີ່ຈະທຳຄຳຮ້ອງຂໍໃບຂັບຂີ່ຊັ້ນ "L" ຫລືຊັ້ນ "G" . ຢູ່ທາງຫລັງຂອງໃບຄຳຮ້ອງນັ້ນມີບ່ອນສຳລັບໃຫ້ພໍ່ແມ່ຫລືຜູ້ປົກຄອງເຊັນ.

ທ່ານສາມາດຂໍເອົາປຶ້ມຄູ່ມືຜູ້ຂັບຂີ່ໄດ້ນຳທຸກງສູນສອບການຂັບລົດຂອງກະຊວງຂົນສົ່ງແລະຄົມມະນາຄົມທີ່ທ່ານຈະຫາໄດ້ໃນສ່ວນສີຟ້າຂອງປຶ້ມໂທລະສັບ ໂດຍໃຫ້ເບິ່ງຢູ່ກ້ອງຫົວຂໍ້ "ຣັຖບານອົງຕາຣິໂອ". ປຶ້ມຄູ່ມືທີ່ວ່ານີ້ໃຫ້ຄຳອະທິບາຍກ່ຽວກັບກົດຈະຣາຈອນຂອງອົງຕາຣິໂອແລະການຮັກສາຄວາມປອດພັຍ; ໃຫ້ທ່ານສຶກສາມັນໃຫ້ດີ ກ່ອນທີ່ຈະທຳການຂໍໃບຂັບຂີ່ຊັ້ນ "L" ຫລືຊັ້ນ "G". ທ່ານຈຳຕ້ອງຜ່ານການສອບເສັງຊຶ່ງຈະມາໃນແບບພາສາອັງກິດຫລືພາສາຝຣັ່ງເສດກ່ອນ ກ່ອນທີ່ທ່ານຈະໄດ້ໃບຂັບຂີ່ທີ່ວ່າ. ທ່ານຈະຖືວັຈນານຸກົມໄປນຳກໍໄດ້.

### ການຊອກຫາໂຮງຮຽນສອນຂັບລົດທີ່ດີ

ຖ້າທ່ານຍັງໜຸ່ມນ້ອຍຢູ່ ທ່ານຄວນພິຈາຣະນາຮຽນວິຊາຂັບລົດຊຶ່ງທາງໂຮງຮຽນທ່ານມີໄວ້ບໍຣິການ. ຖ້າບໍ່ດັ່ງນັ້ນແລ້ວ ໃຫ້ທ່ານເຂົ້າຫາພະນັກງານປະກັນພັຍຄົນໃດຄົນນຶ່ງ ຫລືບໍຣິສັດປະກັນພັຍບໍຣິສັດໃດບໍຣິສັດນຶ່ງທີ່ທ່ານຄິດວ່າທ່ານຈະຊື້ແຜນປະກັນພັຍນຳມັນ ແລະຖາມເຂົາເຈົ້າວ່າວິຊາຂັບລົດ

education course offered at your high school.

Otherwise, contact the insurance agent or company which you intend to use and ask them which courses they recognize for a driving training credit. The Ontario Safety League approves driver education schools for some of the insurance companies and attending one of these approved schools may give you a reduction in your insurance rate.

A driver of any age with less than three years' driving experience, providing it is accident-free, can usually obtain this credit. The saving on insurance premiums for this credit can be as much as 30% of the premium rate for drivers without approved driver education.

## LICENCES

### Getting a Licence

To get a general driver's class G licence you must be 16 or over and pass a driver's test. When you apply for your licence or appear for your road test, you will be asked for two pieces of identification, one of which gives proof of age. If you have a passport you should take it with you to the examination centre. Part of the test is written or oral and part is a road test. You may write the exam in English or French and may take a dictionary with you. It is a criminal offence to have anyone substitute for you in a test.

Driver examiners of the Ontario Ministry of Transportation and Communications give the road test. There are examination centres in the larger cities and towns. The test is paid for when you pay for you Class "L" licence.

The examination for a driver's licence consists of four parts: tests of vision, knowledge of rules of the road, sign recognition, and outside demonstration of driving ability. An appointment for a driver's test can be made by visiting the examination centre. An appointment for the road test cannot be made by phone, but must be

ພວກໃດເອົາເຈົ້າຮັບຮູ້ເຕັມດີຫລຸດຄ່າປະກັນພັຍໃຫ້. ສະມາຄົມຮັກສາຄວາມປອດພັຍທາງດ້ານຂັບຂີ່ລົດລາອົງຕາຣີໂອຮັບຮູ້ໂຮງຮຽນສອນຂັບລົດແທນບໍຣິສັດປະກັນພັຍຫລາຍໆບໍຣິສັດ; ສະນັ້ນ ທ່ານອາດຈະໄດ້ຫລຸດຄ່າປະກັນພັຍທ່ານ ຖ້າທ່ານເຂົ້າຮຽນໃນໂຮງຮຽນຂັບລົດພວກທີ່ວ່ານີ້.

ຜູ້ຂັບລົດໜຸກງົມ, ບໍ່ວ່າຈະມີອາຍຸຈັກປີ, ທີ່ມີປະສົບປະການທາງດ້ານຂັບລົດທີ່ຕ່ຳກວ່າສາມປີ ຕາມທັມມະດາແລ້ວ ໄດ້ຫລຸດຄ່າປະກັນພັຍແບບທີ່ວ່າມາ ຖ້າຫາກວ່າຜູ້ກ່ຽວບໍ່ມີອຸບັດເຫດຈັກເທື່ອ. ສຳລັບຜູ້ຂັບລົດທີ່ບໍ່ໄດ້ຜ່ານໂຮງຮຽນຂັບຂີ່ທີ່ທາງບໍຣິສັດປະກັນພັຍຮັບຮູ້ແລ້ວ ເຂົາເຈົ້າອາດຈະໄດ້ຫລຸດເຖິງ ໓໐%.

## ໃບຂັບຂີ່

### ການເອົາໃບຂັບຂີ່

ເພື່ອຈະໄດ້ໃບຂັບຂີ່ທົ່ວໄປຊັ້ນ "G" ແລ້ວ ທ່ານຕ້ອງມີອາຍຸຕັ້ງແຕ່ ໑໖ປີ ຂຶ້ນໄປ ແລະຜ່ານການສອບຍ່າງໄດ້ຜົນ. ເມື່ອທ່ານທຳຄຳຮ້ອງຂໍໃບຂັບຂີ່ ຫລືເມື່ອທ່ານໄປເສັງຂັບ ທ່ານຈະຕ້ອງສະແດງເອກກະສານກ່ຽວກັບອາຍຸທີ່ແທ້ຈິງຂອງທ່ານ. ຖ້າທ່ານມີໜັງສືຜ່ານແດນ ທ່ານກໍ່ຄວນເອົາໄປນຳ. ພາກນຶ່ງຂອງການສອບນັ້ນແມ່ນພາກຂຽນຫລືພາກປາກເປົ່າ ແລະອີກພາກນຶ່ງນັ້ນແມ່ນພາກຂັບ. ສຳລັບພາກຂຽນນັ້ນ ທ່ານຈະເລືອກເອົາພາສາອັງກິດຫລືພາສາຝຣັ່ງເສດກໍ່ໄດ້ ແລະທ່ານກໍ່ຍັງສາມາດຖືວັຈນານຸກົມເຂົ້າໄປນຳໄດ້ອີກ. ມັນເປັນການຜິດຖານອາຍາທີ່ທ່ານຈະໃຫ້ຄົນອື່ນເຂົ້າເສັງແທນທ່ານ.

ເຈົ້າໜ້າທີ່ຄວບຄຸມການເສັງຂັບຂອງກະຊວງຂົນສົ່ງແລະຄົມມະນາຄົມອົງຕາຣີໂອເປັນຜູ້ກຳກັບການສອບເສັງ. ຫ້ອງການເສັງຂັບມີຢູ່ທົ່ວເມືອງໃຫຍ່ແລະເມືອງນ້ອຍທັງຫລາຍ. ຄ່າເສັງຂັບນັ້ນຮວມຢູ່ນຳຄ່າເສັງເອົາໃບອະນຸຍາດຊັ້ນ "L" .

ການເສັງເອົາໃບຂັບຂີ່ນັ້ນມີນຳກັນສີ່ພາກ: ພາກທົດສອບສາຍຕາ, ພາກທົດສອບຄວາມຮູ້ກ່ຽວກັບກົດຖະໜົນ, ພາກທົດສອບຄວາມຮູ້ກ່ຽວກັບປ້າຍຈະຣາຈອນ, ແລະພາກທົດສອບຄວາມສາມາດໃນການຂັບ. ທ່ານສາມາດໄປນັດຂໍເຂົ້າເສັງໄດ້ດ້ວຍຕົນເອງນຳຫ້ອງການສອບເສັງ. ສຳລັບການນັດຂໍເຂົ້າເສັງຂັບນັ້ນ ທ່ານຕ້ອງໄປນັດດ້ວຍຕົນເອງ ຫລືໃຫ້ຜູ້ໃດຜູ້ນຶ່ງໄປນັດແທນ. ທ່ານຈະນັດທາງໂທລະສັບບໍ່ໄດ້ເດັດຂາດ. ຍ້ອນວ່າມີຄົນເຂົ້າຂໍເສັງຂັບຫລາຍ ການນັດຂໍເຂົ້າເສັງຂັບຂອງທ່ານຕາມທັມມະດາແລ້ວ ຈິ່ງກິນເວລາຫລາຍອາທິດ. ທ່ານບໍ່ຕ້ອງນັດລ່ວງໜ້າ ຖ້າທ່ານຈະເຂົ້າເສັງພາກຂຽນແລະກວດສາຍຕາ.

made in person by the applicant or someone acting on the applicant's behalf. These appointments are usually arranged several weeks in advance because they fill up so quickly. An appointment is not needed for the written and visual tests.

Motorcycle Licence

A special driver's licence is needed to operate a motorcycle. There are two licences available for motorcycle drivers', a Class "R" and a Class "M". By taking a vision, written or oral test and an off-road skill test, you will be provided with a Class "R" driver's licence for learners, which is valid for 60 days. To obtain a Class "M" driver's licence, a further road test is required. The fee is $11.00 for a motorcycle driver's licence. If you already have an Ontario driver's licence of another class, there is no further licensing fee. However, if this is your first driver's licence, there will be an additional $3.00 fee for your one-year licence. Before taking your tests, study the motorcycle handbook and driver's handbook. Further information can be obtained from a driver examination centre or the Ministry of Transportation and Communications listed under "Government of Ontario" in the blue pages at the back of the telephone directory.

New Residents

If you have a valid driver's licence equivalent to Class "G" or "M" from another province or territory in Canada, you must take a vision test, which is free, and pay the $3.00 fee for the one-year licence. If you come from another "classified" province or territory in Canada and have a higher class licence than Class "G" or "M", a vision screening and medical will be required and payment of a $3.00 fee for your one-year driver's licence.

If you have a valid licence from the United States, you must take the written test, which will be $3.00, plus another $3.00 for

ໃບຂັບຂີ່ສຳລັບລົດຈັກ

ເພື່ອຈະຂັບລົດຈັກ ທ່ານຕ້ອງມີໃບຂັບຂີ່ສຳລັບລົດຈັກໂດຍສະເພາະ. ໃບຂັບຂີ່ທີ່ວ່ານີ້ມີສອງແນວຄືກັນ: ໃບຂັບຂີ່ຂັ້ນ "R" ແລະໃບຂັບຂີ່ຂັ້ນ "M". ທ່ານຈະໄດ້ຮັບໃບຂັບຂີ່ຂັ້ນ "R", ຊຶ່ງມີອາຍຸຫົກສິບປີ, ເມື່ອທ່ານຜ່ານການທົດສອບສາຍຕາ, ການທົດສອບກົດຈະລາຈອນພາກຂຽນຫລືພາກປາກເປົ່າ ແລະການທົດສອບຄວາມຊຳນານໃນການໃຊ້ລົດຈັກນອກຫົນທາງ. ທ່ານຕ້ອງຜ່ານການທົດສອບຂັບໃນທ້ອງຖະໜົນ ກ່ອນທີ່ຈະໄດ້ຮັບໃບຂັບຂີ່ຂັ້ນ "M". ຄ່າທຳນຽມສຳລັບໃບຂັບຂີ່ຂັ້ນ "M" ນີ້ແມ່ນ $໑໑.໐໐. ຖ້າທ່ານມີໃບຂັບຂີ່ຂັ້ນອື່ນຂອງອົງຕາຣີໂອຢູ່ກ່ອນແລ້ວ ທ່ານບໍ່ຈຳເປັນຕ້ອງໄດ້ເສັຽຄ່າທຳນຽມດັ່ງກ່າວແຕ່ຢ່າງໃດ. ເຖິງຢ່າງໃດກໍຕາມ ຖ້າວ່າໃບຂັບຂີ່ທີ່ວ່ານີ້, ຊຶ່ງຈະໃຊ້ໄດ້ປີນຶ່ງ, ຫາກແມ່ນໃບຂັບຂີ່ໃບທຳອິດຂອງທ່ານແລ້ວ ທ່ານກໍຈຳເປັນຈະຕ້ອງໄດ້ຈ່າຍຄ່າທຳນຽມເພີ່ມອີກສາມດອນລາ. ກ່ອນຈະເຂົ້າທຳການສອບເສັງ ໃຫ້ທ່ານສຶກສາປຶ້ມຄູ່ມືຜູ້ຂັບຂີ່ລົດຈັກແລະລົດທົ່ວໄປ. ເພື່ອລາຍລະອຽດເພີ່ມເຕີມ ໃຫ້ທ່ານຕິດຕໍ່ນຳສູນສອບເສັງ ຫລືນຳກະຊວງຂົນສົ່ງແລະຄົມມະນາຄົມຊຶ່ງທ່ານຈະຫາໄດ້ ໂດຍໃຫ້ເບິ່ງຢູ່ກ້ອງຫົວຂໍ້ "ລັດຖະບານອົງຕາຣີໂອ" ໃນພາກສ່ວນສີຟ້າໃນສ່ວນທ້າຍຂອງປຶ້ມໂທລະສັບ.

ຜູ້ເຂົ້າເມືອງໃໝ່

ຖ້າທ່ານມີໃບຂັບຂີ່ທີ່ຍັງໃຊ້ການໄດ້ຢູ່ທີ່ຢູ່ໃນລະດັບດຽວກັບຂັ້ນ "G" ຫລືຂັ້ນ "M" ຈາກແຂວງອື່ນຫລືດິນແດນສ່ວນອື່ນຂອງການາດາ ທ່ານຕ້ອງໄດ້ຜ່ານການກວດສາຍຕາໃໝ່ ແລະຈ່າຍຄ່າທຳນຽມຈຳນວນສາມດອນລາສຳລັບໃບຂັບຂີ່ທີ່ຈະໃຊ້ການໄດ້ປີນຶ່ງຂອງທ່ານ. ການກວດສາຍຕານີ້ບໍ່ມີຄ່າບໍລິການແຕ່ຢ່າງໃດ. ຖ້າທ່ານມາຈາກແຂວງອື່ນຫລືດິນແດນສ່ວນອື່ນທີ່ຖືກ "ໝາຍຕົວ" ຂອງການາດາ ແລະມີໃບຂັບຂີ່ທີ່ຢູ່ໃນລະດັບສູງກວ່າຂັ້ນ "G" ແລະ "M" ແລ້ວ ທ່ານກໍຈຳຕ້ອງໄດ້ກວດສາຍຕາແລະສຸຂພາບໃໝ່ ພ້ອມທັງຈ່າຍຄ່າທຳນຽມຈຳນວນສາມດອນລາສຳລັບໃບຂັບຂີ່ທີ່ຈະໃຊ້ການໄດ້ປີນຶ່ງຂອງທ່ານ.

ຖ້າທ່ານມີໃບຂັບຂີ່ທີ່ຍັງໃຊ້ການໄດ້ຢູ່ມາຈາກສະຫະລັດອະເມຣິກາ ທ່ານຈຳຕ້ອງເສັງພາກຂຽນໃໝ່ຊຶ່ງມີຄ່າທຳນຽມຈຳນວນສາມດອນລາ; ນອກເໜືອໄປຈາກນີ້ ທ່ານຍັງຈຳຕ້ອງໄດ້ເສັຽຄ່າທຳນຽມຈຳນວນສາມດອນລາອີກສຳລັບໃບຂັບຂີ່ທີ່ຈະໃຊ້ໄດ້ປີນຶ່ງຂອງທ່ານ. ຖ້າທ່ານທຳຄຳຮ້ອງຂໍໃບຂັບຂີ່ທີ່ຢູ່ໃນລະດັບສູງກວ່າທີ່ວ່າມານີ້ແລ້ວ ທ່ານກໍຈະຈຳຕ້ອງໄດ້ກວດສອບສາຍຕາ, ເສັງພາກຂຽນຫລືພາກປາກເປົ່າ ແລະເສັງຂັບໃໝ່. ຄ່າທຳນຽມທັງໝົດຕົກເປັນເງິນຈຳນວນ $໑໖.໐໐ ໂດຍນັບ

your one-year licence. If you apply for a higher class licence, you will be required to take a vision screening, written or oral test and a road test in that class of vehicle. The fee is $12.00, plus $3.00 for your one-year licence.

Persons from all other jurisdictions applying for a driver's licence are required to take a vision screening, written or oral test and road test in the class of vehicle required. The fee is $12.00 and a medical is required for classes higher than "G" or "M". There is also the additional fee of $3.00 for the one-year driver's licence.

Visitors

A visitor 16 years of age or over, who holds a licence from another Canadian province or territory, does not need an Ontario driver's licence for six months while visiting. You will be required to get an Ontario driver's licence within 60 days if you decide to become a resident.

Visitors from all other jurisdictions do not need an Ontario licence if they are 16 years of age or over, have a valid licence from their own country, have a valid international driver's licence and have not lived in Ontario more than three months in any one year.

Vehicle Licence Plates

Two licence plates are issued for each motor vehicle when it is first registered for use in Ontario. Upon payment of renewal fees, in subsequent years, validation stickers for the licence plates issued.

## BUYING A USED CAR

Buying a used car can be risky; the price is lower but repairs can be very expensive. If you buy the car on credit, the total cost may be much higher than you expect by the time you have finished paying for it.

$໓.00 ທີ່ທ່ານຕ້ອງເສັຽເພີ້ມເຕີມສຳລັບໃບຂັບຂີ່ທີ່ທ່ານຈະໄດ້ມາແລະທີ່ຈະໃຊ້ໄດ້ນຶ່ງປີ.

ບໍ່ວ່າໃຜທີ່ມາຈາກປະເທດອື່ນທີ່ຍື່ນຄຳຮ້ອງຂໍໃບຂັບຂີ່ ຕ້ອງຜ່ານການກວດສອບສາຍຕາ, ການເສັງພາກຂຽນຫລືພາກປາກເປົ່າ ແລະການເສັງຂັບໃນຣະດັບຍານພາຫະນະທີ່ຜູ້ກ່ຽວຕ້ອງການ. ຜູ້ທີ່ຕ້ອງການໄດ້ໃບຂັບຂີ່ທີ່ມີຣະດັບສູງກວ່າຊັ້ນ "G" ຫລືຊັ້ນ "M" ນັ້ນ ຕ້ອງເສັຽຄ່າທຳນຽມຈຳນວນ $໑໒.00 ແລະກວດສຸຂພາບນຳ. ນອກເໜືອຈາກນີ້ ຍັງມີຄ່າທຳນຽມຈຳນວນສາມດອນລາສຳລັບໃບຂັບຂີ່ທີ່ຈະໃຊ້ໄດ້ປີນຶ່ງອີກ.

<u>ຜູ້ມາຢ້ຽມຢາມ</u>

ຜູ້ມາຢ້ຽມຢາມທີ່ມີອາຍຸຫລາຍກວ່າສິບຫົກປີທີ່ຖືໃບຂັບຂີ່ຈາກແຂວງຫລືດິນແດນອື່ນຂອງການາດາ ບໍ່ຕ້ອງການໃບຂັບຂີ່ຂອງອົງຕາຣີໂອ ສຳລັບຫົກເດືອນທຳອິດ. ທ່ານຈຳຕ້ອງທຳການຂໍໃບຂັບຂີ່ຂອງອົງຕາຣີໂອພາຍໃນຫົກສິບມື້ ຖ້າຫາກວ່າທ່ານຕັດສິນໃຈຈະຢູ່ໃນແຂວງເລີຍ.

ຜູ້ມາຢ້ຽມຢາມຈາກປະເທດອື່ນບໍ່ຕ້ອງການໃບຂັບຂີ່ຂອງອົງຕາຣີໂອ ຖ້າຫາກພວກເຂົາເຈົ້າມີອາຍຸສິບຫົກປີຫລືເກີນສິບຫົກປີ, ມີໃບຂັບຂີ່ທີ່ໃຊ້ການໄດ້ຈາກປະເທດຂອງພວກເຂົາເຈົ້າ, ມີໃບຂັບຂີ່ສາກົນທີ່ໃຊ້ການໄດ້ ແລະບໍ່ໄດ້ຢູ່ໃນແຂວງອົງຕາຣີໂອເກີນກວ່າສາມເດືອນໃນປີໃດນຶ່ງ.

<u>ປ້າຍທະບຽນລົດ</u>

ລົດແຕ່ລະຄັນ, ເມື່ອມັນຖືກລົງທະບຽນແລ້ວທຳອິດສຳລັບໃຊ້ໃນອົງຕາຣີໂອນັ້ນ, ຈະໄດ້ຮັບປ້າຍທະບຽນສອງປ້າຍນຳກັນ. ໃນປີຕໍ່ມາ ເມື່ອທ່ານຈ່າຍຄ່າຕໍ່ອາຍຸທະບຽນ ທ່ານກໍຈະໄດ້ຮັບເຄື່ອງໝາຍພິເສດສຳລັບຕິດໃສ່ປ້າຍທະບຽນຂອງທ່ານ.

<u>ການຊື້ລົດເກົ່າ</u>

ຊື້ລົດເກົ່າອາດເປັນການຊ່ຽງ; ລາຄາມັນຕ່ຳ ແຕ່ວ່າຄ່າສ້ອມແປງອາດແພງເກີນຄາດ. ຖ້າທ່ານຊື້ດ້ວຍເງິນເຊື່ອ ລາຄາທັງໝົດອາດສູງເກີນກວ່າທ່ານຄາດ ເມື່ອຮອດຕອນທີ່ທ່ານຈ່າຍໝົດ.

<u>ຜູ້ຈຳໜ່າຍ</u>

ໃຫ້ເລືອກຜູ້ຈຳໜ່າຍໃຫ້ດີ. ໃຫ້ລະວັງ ຖ້າຜູ້ຈຳໜ່າຍຄຸມໃຫ້ທ່ານຊື້. ຖ້າເປັນໄປໄດ້ ໃຫ້ຖາມລາຍລະອຽດນຳຜູ້ທີ່ເຄີຍໄດ້ຊື້ລົດຊື້ລານນຳຜູ້ຈຳໜ່າຍຄົນທີ່ທ່ານກຳລັງພົວພັນຕິດຕໍ່ຢູ່ໃນປັດຈຸບັນ. ທ່ານຍັງສາມາດກວດສອບນຳຫ້ອງການສົ່ງເສີມການຄ້າ (Better Business Bureau) ທີ່ທ່ານຈະຫາໄດ້ໃນປຶ້ມໂທລະສັບ. ເມື່ອກວດວ່າຜູ້ຈຳໜ່າຍນັ້ນມີທະບຽນຫລືບໍ່ ໃຫ້ຂຽນຫລືໂທລະສັບຫາ:

## The Dealer

Select your dealer carefully. Be suspicious if the dealer tries to pressure you to buy. If you can, check with people who have bought cars from your dealer before. You can also check with the Better Business Bureau which is listed under that name in the telephone book. To find out if the dealer is registered, write or phone.

Registrar, Motor Vehicle Dealers' Act
Consumer and Commercial Relations
55 Yonge Street
Toronto, Ontario M7A 2H6
Telephone: (416) 965-3025

If you are buying a used car privately, from someone who is not a dealer, check the automobile registration to see if the person really owns it. This can be done by writing the Motor Vehicles Branch of the Ministry of Transportation and Communications. Also check the person's driver's licence and make sure that the name and address is the same as that shown on the registration.

## Safety Standards Certificate

Every used car which is sold privately or by a dealer must be certified unless the licence plates and motor vehicle permit have been surrendered to a ministry licence-issuing office and the car is bought with an unfit vehicle permit. The buyer then becomes responsible to obtain a certificate. The vehicle may not be licenced or driven until this is done.

Any motor vehicle inspection station licensed by the Ministry of Transportation and Communications can carry out a safety standards certificate. Most used car dealers can certify the cars that they sell. There are strict regulations to govern certification.

## Inspecting the Car

Examine the car carefully in daylight for wear, body damage and wheel alignment. Take it out and test it on the road at different

REGISTRAR, MOTOR VEHICLE DEALERS' ACT
CONSUMER AND COMMERCIAL RELATIONS
555 YONGE STREET
TORONTO, ONTARIO M7A 2H6
TELEPHONE: (416)965-3025

ຖ້າທ່ານຈະຊື້ລົດເກົ່ານຳຄົນທີ່ບໍ່ແມ່ນຜູ້ຈຳໜ່າຍທາງການແລ້ວ ໃຫ້ກວດເບິ່ງທະບຽນລົດເບິ່ງວ່າ ຜູ້ທີ່ທ່ານຈະຊື້ນຳນັ້ນ ເປັນເຈົ້າຂອງລົດຄັນທີ່ວ່າແທ້ຫລືບໍ່. ທາງກວດທາງນຶ່ງກໍແມ່ນໃຫ້ທ່ານຂໍຮັບຕາ ຫ້ອງການຍານຍົນຂອງກະຊວງຂົນສົ່ງແລະຄົມມະນາຄົມ. ອີກທາງນຶ່ງກໍແມ່ນໃຫ້ທ່ານກວດເບິ່ງໃບຂັບ ຂີ່ຂອງຜູ້ກ່ອນ ແລະໃຫ້ແນ່ໃຈວ່າຊື່ແລະທີ່ຢູ່ໃນນັ້ນແມ່ນແນວດຽວກັນກັບແນວທີ່ຢູ່ໃນໃບທະບຽນ.

<u>ໃບຢັ້ງຢືນຄວາມປອດໄພ</u>

ລົດເກົ່າທຸກຄັນທີ່ທຸກຄົນໃດທຸກຄົນນຶ່ງ ຫລືຜູ້ຈຳໜ່າຍທາງການຜູ້ໃດຜູ້ນຶ່ງເປັນຜູ້ຂາຍອອກ ຕ້ອງຖືກຢັ້ງຢືນວ່າປອດໄພ ເວັ້ນເສັຽແຕ່ວ່າປ້າຍທະບຽນແລະໃບທະບຽນຂອງລົດຄັນດັ່ງກ່າວຖືກສົ່ງຄືນ ໃຫ້ແກ່ຫ້ອງການອອກໃບອະນຸຍາດ ແລະລົດຄັນດັ່ງກ່າວຖືກຊື້ມາດ້ວຍໃບອະນຸຍາດໃຊ້ລົດທີ່ບໍ່ຖືກຕ້ອງ. ເມື່ອເປັນແນວນັ້ນ ທາງຜູ້ຊື້ຕ້ອງເປັນຜູ້ຮັບຜິດຊອບໃນການຂໍໃບຢັ້ງຢືນ. ຜູ້ຊື້ອາດຈະບໍ່ໄດ້ຮັບໃບທະ ບຽນຂອງລົດຄັນດັ່ງກ່າວ ຫລືອາດຈະຂັບມັນບໍ່ໄດ້ ຈົນກວ່າວ່າຈະໄດ້ໃບຢັ້ງຢືນທີ່ວ່າ. ບ່ອນສະຖານີ ກວດກາລົດລາສະຖານີໃດທີ່ໄດ້ຮັບອະນຸຍາດຈາກກະຊວງຂົນສົ່ງແລະຄົມມະນາຄົມ ສາມາດອອກໃບຢັ້ງ ຢືນຄວາມປອດໄພໄດ້. ບ່ອນຂາຍລົດເກົ່າສ່ວນຫລາຍສາມາດຢັ້ງຢືນຄວາມປອດໄພຂອງລົດທີ່ພວກ ເຂົາເຈົ້າຂາຍໄດ້. ການຢັ້ງຢືນຄວາມປອດໄພຂອງລົດລານັ້ນແມ່ນຢູ່ພາຍໃຕ້ກົດເກນທີ່ໜາແໜ້ນ.

<u>ການກວດເບິ່ງສະພາບລົດ</u>

ໃຫ້ກວດເບິ່ງລົດທີ່ຈະຊື້ໃຫ້ດີໃນຕອນທີ່ບ່ອນມີແສງແດດຢູ່ ວ່າມີຄວາມເສັຽຫາຍຫື່ໄປຫລາຍປານ ໃດ, ວ່າຕົວຖັງມີຮອຍບອບບຸບໍ່ ແລະວ່າພວກກົງບັນເຂົ້າຮູບເຂົ້າຮອຍບໍ່. ໃຫ້ເອົາມັນອອກ ແລ້ວ ຂັບລອງຕາມທີ່ນທາງ ໂດຍໃຊ້ຄວາມໄວຂນາດຕ່າງໆລອງເບິ່ງ. ທ່ານອາດຕ້ອງການຈ້າງຊ່າງແປງ ລົດຄົນໃດຄົນນຶ່ງທີ່ທ່ານໄວ້ໃຈຊ່ວຍກວດໃຫ້ທ່ານ. ສະມາຄົມຍົນຍານອົງຕາຣີໂອ (Ontario Motor League) ບໍຣິການກວດກາລົດລາທຸກຊະນິດຢ່າງຖ້ວນທີ່ແລະໄວ້ໃຈໄດ້ ໂດຍເກັບເອົາຄ່າ ກວດດັ່ງກ່າວນຳເລັກນ້ອຍໆ.

<u>ເງິນມັດຈຳ</u>

ຢ່າໃຫ້ເງິນມັດຈຳຫລືວາງເງິນ ນອກເສັຽແຕ່ວ່າທ່ານແນ່ໃຈວ່າທ່ານປະສົງຈະຊື້ລົດຄັນນັ້ນແທ້.

speeds. You may wish to pay a mechanic that you trust to check the car for you. The Ontario Motor League offers a complete and reliabl inspection of any car for a reasonable cost.

The Deposit

Do not make a deposit or down payment unless you are sure you intend to buy the car. Some dealers will give back your deposit, if you change your mind. Others will not.

The Warranty

New cars have warranties for a specific time or distance travelled, usually whichever comes first. This means that some parts of the car are repaired or replaced without charge but you may have to pay for the mechanic's labor. The buyer of a late-model used car has to pay a fee to have the warranty transferred from the old owner. It can be transferred only once and then only if there is an unexpired portion. The safety standards certificate is not a warranty. If there is no warranty, this should be stated on the sales contract. If there is one, if must be spelled out. Do not accept verbal promises from the person selling the car. You cannot force anyone to keep promises unless they are written down.

The Purchase Order

When you buy a car from a dealer, you will receive a copy of the purchase order. This must state the names and addresses of the buyer and seller, a detailed description of the car, the price, the amount of the deposit and any other charges for which you are responsible. If it is a used car, the mileage must be written on the order.

If you are trading in an older car on a new one, details of the trade-in must be included, such as licence number, mileage and the money allowed for the old car. The dealer is responsible for this.

If you are buying a used car and you arrange through the dealer

ຜູ້ຈຳໜ່າຍບາງຄົນຈະຄືນເງິນໃຫ້ທ່ານ ຖ້າທ່ານປ່ຽນໃຈ ແລະບາງຄົນຈະບໍ່ຄືນໃຫ້ທ່ານ.

ໃບປະກັນ

ພວກລົດໃຫມ່ຖືກປະກັນຕາມໄລຍະເວລາທີ່ກຳນົດໄວ້ ຫລືຕາມໄລຍະທາງທີ່ແລ່ນ; ຕາມທັມມະດາແລ້ວ ແລ້ວແຕ່ອັນໃດຈະຫມົດກຳນົດກ່ອນ. ນີ້ຫມາຍຄວາມວ່າຊິ້ນສ່ວນບາງແນວຂອງລົດທ່ານ, ຖ້າຫາກວ່າເກີດເສັຽຫາຍຂຶ້ນ, ທ່ານນຳເອົາໄປໃຫ້ແປງໄດ້ ຫລືປ່ຽນໄດ້ ໂດຍບໍ່ຕ້ອງເສັຽຄ່າໃດໆ ແຕ່ວ່າທ່ານອາດຕ້ອງໄດ້ເສັຽຄ່າແຮງງານຂອງນາຍຊ່າງ. ຜູ້ຊື້ລົດເກົ່າລຸ້ນລ່າສຸດຕ້ອງໄດ້ເສັຽເງິນຈຳນວນນຶ່ງກ່ອນທີ່ຈະໄດ້ໃບປະກັນຈາກເຈົ້າຂອງເກົ່າມາໄວ້ໃນຄອບຄອງຢ່າງຖືກຕ້ອງ. ໃບປະກັນດັ່ງກ່າວຈະປ່ຽນມືໄດ້ແຕ່ເທື່ອດຽວ. ການປ່ຽນມືນີ້ຈະມີຂຶ້ນໄດ້ກໍ່ຕໍ່ເມື່ອເວລາຫລືໄລຍະທາງທີ່ກຳນົດໄວ້ນັ້ນຍັງເຫລືອຢູ່. ໃບຢັ້ງຢືນຄວາມປອດພັຍບໍ່ແມ່ນໃບປະກັນ. ຖ້າຫາກວ່າບໍ່ມີໃບປະກັນ ຫນັງສືຊື້ຂາຍກໍ່ຄວນບົ່ງອອກໃຫ້ແຈ້ງ. ຖ້າຫາກວ່າມີ ກໍ່ໃຫ້ແຈ້ງຄືກັນ. ຢ່າຖືເອົາຄຳສັນຍາທາງປາກເປົ່າຂອງຜູ້ທີ່ຂາຍລົດ. ທ່ານບໍ່ສາມາດຟ້ອງໃຫ້ໃຜຮັກສາຄຳສັນຍາໄດ້ ເວັ້ນເສັຽແຕ່ວ່າຄຳສັນຍານັ້ນມີໄວ້ເປັນທາງລາຍລັກອັກສອນ.

ໃບສັ່ງຊື້

ເມື່ອທ່ານຊື້ລົດນຳຜູ້ຈຳໜ່າຍ ທ່ານຈະໄດ້ຮັບໃບສຳເນົາຂອງໃບສັ່ງຊື້ຂອງທ່ານ. ນີ້ແມ່ນລາຍລະອຽດຕ່າງໆທີ່ບັນຈຸຢູ່ໃນໃບດັ່ງກ່າວ: ຊື່ແລະທີ່ຢູ່ຂອງຜູ້ຊື້ແລະຜູ້ຂາຍ, ລັກສນະຂອງລົດ, ລາຄາ, ຈຳນວນເງິນມັດຈຳ ແລະຄ່າອື່ນໆທີ່ທ່ານຮັບຜິດຊອບ. ຖ້າຫາກວ່າລົດທີ່ທ່ານຊື້ນັ້ນເປັນລົດເກົ່າ ໄລຍະທາງທີ່ລົດຄັນດັ່ງກ່າວໄດ້ແລ່ນມາແລ້ວຈະຕ້ອງຖືກບັນທຶກໄວ້ໃນຫນັງສືນັ້ນຄືກັນ.

ຖ້າຫາກວ່າທ່ານຊື້ລົດໃຫມ່ ໂດຍເອົາລົດເກົ່າເຂົ້າແລກເອົາເງິນເພີ່ມໃສ່ແລ້ວ ໃບສັ່ງຊື້ນັ້ນກໍ່ຈະຕ້ອງມີລາຍລະອຽດຕ່າງໆກ່ຽວກັບການແລກປ່ຽນນັ້ນອີກ ດັ່ງເຊັ່ນນ້ຳເບີທະບຽນ, ໄລຍະທາງທີ່ລົດໄດ້ແລ່ນມາແລ້ວ ແລະຈຳນວນເງິນທີ່ໄດ້ຈາກການຂາຍລົດຄັນດັ່ງກ່າວ. ຜູ້ຈຳໜ່າຍເປັນຜູ້ຮັບຜິດຊອບໃນເຣື່ອງນີ້.

ຖ້າທ່ານຊື້ລົດເກົ່າແລະທ່ານຈັດແຈງໃຫ້ທາງຜູ້ຈຳໜ່າຍເປັນຜູ້ຈ່າຍໃຫ້ທ່ານແລ້ວ ລາຍລະອຽດທຸກຢ່າງກ່ຽວກັບການຈ່າຍແລະດອກເບັ້ຽຕ້ອງມີຢູ່ໃນສັນຍາ. ຜູ້ຈຳໜ່າຍລົດເປັນຜູ້ຮັບຜິດຊອບກ່ຽວກັບເຣື່ອງນີ້. ຖ້າທ່ານຊື້ນຳບຸກຄົນໃດບຸກຄົນນຶ່ງ ທ່ານສາມາດກວດເບິ່ງວ່າລົດທີ່ທ່ານຈະຊື້ນັ້ນ ເຈົ້າຂອງມັນໄດ້ຈ່າຍເປັນທີ່ຮຽບຮ້ອຍແລ້ວໄດ້ ໂດຍເຂົ້າໄປຖາມນຳພະແນກລົງທະບຽນທີ່ດິນ. ພະແນກດັ່ງກ່າວເກັບຮັກສາບັນທຶກກ່ຽວກັບຫນີ້ສິນທຸກຢ່າງ ຫລືໃບຢຶດສັບສິນສ່ວນຕົວໃນອົງຕາຣິໂອ ແລະ

to finance it, all information concerning payments, interest charges and rates must be in the contract. Car dealers must take responsibility for this. If you are buying from an individual you can make sure it is fully paid for by checking with the Land Registration Division. It maintains a record of all debts or liens on personal property in Ontario and is listed in your local telephone directory under "Government of Ontario."

Change of Ownership

By law, the Ontario Ministry of Transportation and Communication must be notified of the change of ownership of a car within six days. The buyer and the seller are equally responsible for seeing that this is done. Both must sign the application for transfer on the back of the motor vehicle permit. Mail the application, with the safety standards certificate, a bill of sale for retail sales tax of 7% payable by the buyer, and proof of the motor vehicle liability insurance, by registered letter or take them personally to the Motor Vehicles Licence Issuing Office.

## SERVICE STATIONS

Service stations take care of all your car's needs, from gasoline to repairs. It is important to find one that you can trust. The Ontario Motor League has a system that can help you. Service stations with good records of competent repairs and reasonable prices are approved by the Ontario Motor League. These stations display large signs with CAA printed on them. Members of the Ontario Motor League are notified of the locations of all approved service stations in the province.

## RENTING A CAR

It is a good idea to shop around before renting. The rental rate will depend on what kind of car you want, how long you need it

ທ່ານຈະຫາພະແນກທີ່ວ່ານີ້ໄດ້ໃນປຶ້ມໂທລະສັບຂອງທ່ານ ໂດຍໃຫ້ເບິ່ງຢູ່ກ້ອງຫົວຂໍ້ "ຣັຖບານອົງຕາຣິໂອ".

<u>ການປ່ຽນເຈົ້າຂອງ</u>

ຕາມກົດໝາຍແລ້ວ ທາງກະຊວງຂົນສົ່ງແລະຄົມມະນາຄົມຕ້ອງຖືກບອກໃຫ້ຮູ້ກ່ຽວກັບການປ່ຽນເຈົ້າຂອງລົດພາຍໃນຫົກມື້. ຜູ້ຊື້ແລະຜູ້ຂາຍ ຕ່າງຄົນຕ່າງມີຄວາມຮັບຜິດຊອບໃນດ້ານນີ້. ທັງສອງຝ່າຍຕ້ອງເຊັນຄຳຮ້ອງຂໍປ່ຽນເຈົ້າຂອງທີ່ຢູ່ຂ້າງຫລັງຂອງໃບທະບຽນເອງ. ໃຫ້ສົ່ງໃບຄຳຮ້ອງດັ່ງກ່າວ ພ້ອມທັງໃບຢັ້ງຢືນຄວາມປອດໄພ, ຫນັງສືຊື້ຂາຍສຳລັບພາສີການຄ້າທີ່ຕົກຢູ່ໃນອັດຕຣາ ໗% ຊຶ່ງທາງຜູ້ຊື້ຈະເປັນຜູ້ຈ່າຍ, ແລະຫລັກຖານກ່ຽວກັບການປະກັນການເສັຽຫາຍຂອງຄົນອື່ນ ໂດຍທາງຫນັງສືລົງທະບຽນ ຫລືໃຫ້ຖືໄປຫາພະແນກຍານຍົນດ້ວຍຕົນເອງ.

<u>ປ້ອມນ້ຳມັນ</u>

ປ້ອມນ້ຳມັນສນອງຄວາມຕ້ອງການທຸກສິ່ງທຸກປະການຂອງລົດຂອງທ່ານ, ຕັ້ງແຕ່ນ້ຳມັນຫາການສ້ອມແປງ. ມັນສຳຄັນທີ່ທ່ານຈະຊອກຫາປ້ອມນ້ຳມັນທີ່ທ່ານໄວ້ໃຈໄດ້. ສະມາຄົມຍານຍົນອົງຕາຣິໂອ "Ontario Motor League" ມີລະບົບທີ່ຈະຊ່ວຍທ່ານໄດ້. ພວກປ້ອມນ້ຳມັນທີ່ມີຊື່ສຽງທາງດ້ານໃຫ້ການສ້ອມແປງທີ່ໄດ້ຜົນແລະທາງດ້ານກຳນົດລາຄາເງິນຄ່າແລະການບໍຣິການຂອງຕົນໃຫ້ຢູ່ໃນຣະດັບທີ່ສົມນາສົມຄວນນັ້ນແມ່ນໄດ້ຮັບການຮັບຮູ້ຈາກທາງສະມາຄົມທີ່ວ່າມາ. ພວກປ້ອມນ້ຳມັນທີ່ຖືກຮັບຮູ້ນີ້ສະແດງປ້າຍເຄື່ອງໝາຍ "CAA" ໄວ້ໃຫ້ຜູ້ຄົນເຫັນ. ສະມາຊິກຂອງສະມາຄົມຍານຍົນອົງຕາຣິໂອ "Ontario Motor League" ມີລາຍລະອຽດກ່ຽວກັບທີ່ຕັ້ງຂອງພວກປ້ອມນ້ຳມັນພາຍໃນແຂວງທີ່ທາງສະມາຄົມຮັບຮູ້.

<u>ການເຊົ່າລົດ</u>

ມັນເປັນການດີທີ່ຈະເລາະຫລາຍໆບ່ອນກ່ອນ ກ່ອນທີ່ຈະຕົກລົງເຊົ່າລົດຄັນໃດຄັນນຶ່ງ. ຄ່າເຊົ່າມັນຂຶ້ນນຳແບບຂອງລົດທີ່ທ່ານຕ້ອງການ, ລະຍະເວລາທີ່ທ່ານຕ້ອງການມັນ ແລະລະຍະທາງທີ່ທ່ານມີຈຸດປະສົງຈະຂັບໄປ. ໃຫ້ກວດເບິ່ງອີກວ່າ ໃນອັດຕຣາເຊົ່າປະຈຳວັນນັ້ນມີຄ່າປະກັນການຄ້ຳຮວມຢູ່ນຳຫລືບໍ່.

ຖ້າທ່ານບໍ່ມີບັດເງິນເຊື່ອ ທາງບໍຣິສັດໃຫ້ເຊົ່າລົດອາດຈຳຕ້ອງຖາມນຳທະນາຄານຫລືນາຍຈ້າງຂອງທ່ານ ເພື່ອໃຫ້ແນ່ໃຈວ່າຖານະເງິນຄຳຂອງທ່ານນັ້ນຢູ່ໃນຂັ້ນດີ. ເຖິງແມ່ນວ່າທາງບໍຣິສັດຈະ

and how many miles you intend to drive. Also check to see whether or not collision-insurance coverage is included in the daily rate.

If you do not have a credit card, it will be necessary for the company to check with your bank or employer to make sure that your credit is good. Even if the company clears you, you can expect to pay a deposit of $100 or more.

Before signing the contract, read it carefully. Before driving out of the lot, check to see that the gas tank has been filled and that the trunk has a spare tire. Find out what to do in case the car breaks down. Make sure you know what time you are expected to return the car. If you are an hour or two late, you may have to pay for a full extra day.

## SAFE DRIVING

### Seat Belts

Most automobiles are equipped with seat belts for the safety of the occupants. The law requires that drivers and passengers must wear seat belts wherever these are available for them. There is a fine if you are caught not wearing your seat belts. Every car that was built after January 1, 1977, must have seat belts in it.

Drivers making local deliveries, and people who have a medical certificate that states physical reasons for not wearing them, do not have to wear seat belts. Drivers must make sure that children under 16 wear belts. They must also warn passengers over 16 to wear them.

### Seasonal Driving

Canadian winters can be very hazardous. In a matter of hours the roads can become icy or snowy and the temperature can drop drastically. Listed below are a few tips which may help you drive more safely.

- Have snow tires on the rear wheels of your car.
- Have anti-freeze in your radiator.

ແນ່ໃຈໃນຕົວທ່ານກໍ່ຕາມ ທ່ານກໍ່ຄວນຕຽມຕົວວາງເງິນມັດຈຳໃນຈຳນວນ $໑໐໐.໐໐ ຫຼືຫຼາຍກວ່າ.

ກ່ອນຈະເຊັນສັນຍາການເຊົ່າ ໃຫ້ອ່ານມັນກ່ອນໃຫ້ດີ. ກ່ອນຈະຂັບອອກໄປ ໃຫ້ກວດເບິ່ງວ່າ ຖັງນ້ຳມັນນັ້ນເຕັມແລ້ວບໍ່ ແລະຢູ່ກັບລົດນັ້ນມີກົງສຳລອງແລ້ວຫຼືບໍ່. ໃຫ້ຖາມເບິ່ງອີກວ່າທ່ານຄວນຈະເຮັດແນວໃດໃນກໍລະນີທີ່ລົດຕາຍກາງເອກກາງທາງ. ໃຫ້ແນ່ໃຈວ່າທ່ານຮູ້ເວລາທີ່ທ່ານຄວນຈະເອົາລົດມາສົ່ງຄືນ. ຖ້າທ່ານຊ້າຊົ່ວໂມງນຶ່ງຫຼືສອງຊົ່ວໂມງ ທ່ານອາດຕ້ອງໄດ້ເສັຽຄ່າເຊົ່າໝົດມື້.

## ການຂັບຂີ່ປອດພັຍ

### ສາຍແອວ

ລົດລາສ່ວນຫຼາຍມີສາຍແອວໄວ້ສຳລັບໃຫ້ຄວາມປອດພັຍແກ່ຜູ້ໂດຍສານ. ກົດໝາຍບົ່ງວ່າ ທັງຜູ້ຂັບແລະຜູ້ໂດຍສານຕ້ອງໃສ່ສາຍແອວ ເມື່ອລົດຄັນທີ່ພວກເຂົາເຈົ້າຂັບນັ້ນມີສາຍແອວໄວ້ໃຫ້ໃຊ້. ທ່ານຈະຖືກໄໝ ເມື່ອເຈົ້າໜ້າທີ່ພົບວ່າທ່ານບໍ່ໃສ່ສາຍແອວຂອງທ່ານ. ລົດທຸກໆຄັນທີ່ຖືກສ້າງຂຶ້ນຫຼັງຈາກວັນທີ ໑ ເດືອນມົກກະຣາ ໑໙໖໘ ຕ້ອງມີສາຍແອວໄວ້ໃຫ້ໃຊ້.

ຜູ້ຂັບຂີ່ນຳສົ່ງສິນຄ້າຕ່າງໆນຳເຂດໃກ້ຄຽງ ແລະບຸກຄົນທີ່ມີໃບຢັ້ງຢືນຈາກທາງໝໍວ່າລາວໃຊ້ສາຍແອວບໍ່ໄດ້ ບໍ່ຈຳເປັນຕ້ອງໃສ່ສາຍແອວ. ຜູ້ຂັບຕ້ອງກຳກັບໃຫ້ເດັກທີ່ມີອາຍຸຕ່ຳກວ່າສິບຫົກປີໃສ່ສາຍແອວ ແລະຕ້ອງເຕືອນຜູ້ໂດຍສານທີ່ມີອາຍຸຫຼາຍກວ່າສິບຫົກປີໃຫ້ໃຊ້ສາຍແອວດັ່ງກ່າວຄືກັນ.

### ການຂັບລົດຕາມຣະດູການ

ຣະດູໜາວການາດຊຽນອາດເຕັມໄປດ້ວຍອັນຕະລາຍ. ໃນບໍ່ເທົ່າໃດຊົ່ວໂມງ ຖະໜົນຫົນທາງອາດເປັນນ້ຳແຂງ ຫຼືເຕັມໄປດ້ວຍຫິມະ ແລະອຸນນະພູມອາດລົດລົງຢ່າງໄວ. ນີ້ແມ່ນຄຳແນະນຳທີ່ອາດຊ່ວຍໃຫ້ທ່ານຂັບລົດໄດ້ດີຍິ່ງຂຶ້ນ.

- ລໍ້ຫຼັງຕ້ອງແມ່ນລໍ້ສຳລັບພະເຊີນກັບຫິມະໂດຍສະເພາະ.
- ໃຫ້ເບິ່ງໃສ່ແນວກັນຄວາມແຂງຕົວຂອງນ້ຳໃນໝໍ້ນ້ຳຂອງທ່ານ.
- ໃຫ້ກວດເບິ່ງນ້ຳລ້າງກະຈົກເລື້ອຍໆ.
- ໃຫ້ຮັກສາຫົວສົ້ນຂອງໝໍ້ໄຟໃຫ້ສະອາດ.
- ໃຫ້ໃຊ້ນ້ຳມັນເຄື່ອງທີ່ບໍ່ຂຸ້ນປານໃດໃນຣະດູໜາວ.
- ເມື່ອລົດຕະລາດ ໃຫ້ຫັກກົງລໍ້ໄປທາງທີ່ຕະລາດນັ້ນ.
- ຖ້າຫ້າມໃຊ້ການບໍ່ໄດ້ ໃຫ້ນອດຈັກແລະປະຄອງລົດໄປຈົນກວ່າມັນຈະຢຸດ.

- Check the windshield washer fluid frequently.
- Keep the terminals on your battery clean.
- Use thinner oil in winter.
- When skidding, turn your wheel in the direction of the skid.
- If your brakes fail, turn the engine off and coast to a stop.
- Pump your brakes when you are coming to a stop in snowy or icy conditions.
- Keep a shovel and a bag of sand in your trunk, in case you are stuck in snow. The extra weight in the trunk also makes the car easier to steer.
- Two-foot lengths of window screening placed under the rear tires are helpful in moving a car on ice. The screening can be stored in the trunk.
- If the engine is cold when you start the car, let it warm up before you drive away.

Safety Inspection

Police sometimes make spot checks for safety reasons. They stop cars and may ask to see the driver's licence, motor vehicle permit or insurance certificate. They may test the vehicle to make sure it is in working order. An unsafe vehicle can be removed from the highway for public protection. If you are suspected of driving under the influence of alcohol, you may be given a test to check the alcohol level in your body.

THE DEMERIT POINT SYSTEM

All driving convictions are recorded and you accumulate a certain number of points for each offence in the demerit point schedule. Points remain on your record for two years. You may accumulate as few as two points for making an improper turn, or as many as seven for failing to remain at the scene of an accident. There are no demerit points for parking offences. Check the Driver's Handbook

- ໃຫ້ຢຽບຫ້າມຫລາຍໆເທື່ອ ເມື່ອທ່ານໃກ້ບ່ອນຈະຈອດ ເມື່ອຖນົນຫົນທາງເປັນນ້ຳແຂງຫລືຫຸ້ມດ້ວຍຫິມະ.
- ໃຫ້ມີຊ້ວນແລະຖົງຂີ້ຊາຍຖົງນຶ່ງໄວ້ໃນກົ້ນລົດຂອງທ່ານ ສຳລັບເວລາທີ່ລົດທ່ານຕິດຫິມະໃນກາງທາງ. ນ້ຳໜັກເພີ້ມເຕີມໃນກົ້ນລົດນັ້ນເຮັດໃຫ້ທ່ານຄວບຄຸມລົດໄດ້ງ່າຍຂຶ້ນ.
- ແນວບັງບ່ອງຢ້ຽມທີ່ມີຄວາມຍາວປະມານສອງຟຸດ, ຖ້າເອົາຮອງໃສ່ກົງຫລັງ, ຈະຊ່ວຍໃຫ້ລົດເຄື່ອນທີ່ໄດ້ ໃນກໍຣະນີທີ່ຫົນທາງເປັນນ້ຳແຂງ. ທ່ານສາມາດເອົາແນວບັງບ່ອງຢ້ຽມດັ່ງກ່າວໄວ້ກົ້ນລົດໄດ້.
- ຖ້າຫາກຈັກລົດມັນເຢັນຕອນທີ່ທ່ານຕິດມັນ ໃຫ້ທ່ານປະໃຫ້ມັນຮ້ອນຂຶ້ນກ່ອນ ກ່ອນທີ່ທ່ານຈະຂັບມັນອອກໄປ.

## ການກວດຄວາມປອດພັຍຂອງລົດ

ບາງເທື່ອ ເຈົ້າໜ້າທີ່ຕຳຫລວດທຳການກວດຄວາມປອດພັຍຂອງລົດລາຕາມທ້ອງຖນົນ. ພວກເຂົາເຈົ້າປຸດລົດແລ້ວ ຖາມຫາໃບຂັບຂີ່, ໃບທະບຽນ ຫລືໃບປະກັນພັຍ. ພວກເຂົາເຈົ້າອາດກວດເບິ່ງຕົວລົດ ເພື່ອແນ່ໃຈວ່າມັນໃຊ້ການໄດ້ດີ. ລົດຄັນທີ່ບໍ່ປອດພັຍອາດຖືກເອົາອອກຈາກທ້ອງຖນົນ ເພື່ອປະກັນຄວາມປອດພັຍຂອງຜູ້ຄົນທັງຫລາຍ. ຖ້າທາງເຈົ້າໜ້າທີ່ສົງສັຍວ່າທ່ານຂັບລົດພາຍໃຕ້ພິດເຫລົ້າ ທ່ານອາດຈຳຕ້ອງໄດ້ຜ່ານການກວດຣະດັບເຫລົ້າໃນຮ່າງກາຍຂອງທ່ານ.

## ລະບົບຫັກຄະແນນ

ຕາມລະບົບຫັກຄະແນນແລ້ວ ທ່ານຈະເສັຽຄະແນນຈຳນວນໃດຈຳນວນນຶ່ງທຸກໆຄັ້ງທີ່ທ່ານຝ່າຝືນກົດຈະຣາຈອນ ແລະຄະແນນທີ່ທ່ານເສັຽໄປນັ້ນຈະຄ້າງຢູ່ໃນປະວັດຂອງທ່ານເປັນເວລາສອງປີ. ທ່ານອາດເສັຽພຽງແຕ່ສອງຄະແນນ ເມື່ອທ່ານອ້ຽວບໍ່ຖືກບ່ອນ ແລະທ່ານອາດເສັຽຮອດເຈັດຄະແນນ ເມື່ອທ່ານໜີຈາກບ່ອນເກີດອຸບັດເຫດ. ທ່ານຈະບໍ່ເສັຽຈັກຄະແນນ ເມື່ອທ່ານຈອດລົດບໍ່ຖືກບ່ອນ. ໃຫ້ກວດເບິ່ງຄວາມຜິດທີ່ພາໃຫ້ເສັຽຄະແນນໃນປຶ້ມກົດຈະຣາຈອນຂອງທ່ານ.

ຖ້າທ່ານເສັຽຮອດຫົກຄະແນນ ທ່ານຈະໄດ້ຮັບຈົດໝາຍເຕືອນສະບັບນຶ່ງຈາກກະຊວງຂົນສົ່ງແລະຄົມມະນາຄົມ. ຖ້າທ່ານເສັຽຮອດເກົ້າຄະແນນ ທ່ານຕ້ອງໄດ້ເຂົ້າສຳພາດແລະໃຫ້ເຫດຜົນຕ່າງໆນາໆວ່າເປັນຫຍັງທາງການຈຶ່ງບໍ່ຄວນຍຶດໃບຂັບຂີ່ຂອງທ່ານ. ຖ້າທ່ານເສັຽຮອດສິບຫ້າຄະແນນ ທາງການຈະຍຶດໃບຂັບຂີ່ຂອງທ່ານໄວ້ສາມສິບວັນ ແລະເມື່ອທ່ານໄດ້ໃບຂັບຂີ່ຫວ່າຄືນມາ ທ່ານກໍຍັງຈະເສັຽເຈັດ